ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາລານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

01-07 ກໍລະກົດ 2024
ປີທີ 13
ສະບັບທີ 976
ລາຍສັປະດາ

## ປະເມີນການຈັດຕັ້ງປະຕິບັດລັດຖະທຳມະນູນ



(ສພຊ) - ກອງປະຊຸມປະເມີນການຈັດຕັ້ງປະຕິບັດລັດຖະທຳມະນູນ ແຫ່ງ ສປປ ລາວ ສະບັບປີ 2015 ໄດ້ຈັດຂຶ້ນໃນວັນທີ 20 ມິຖຸນາ 2024 ທີ່ສູນເຝິກອົບຮົມ ແລະ ການຮ່ວມມືສາກົນ (ICTC) ໂດຍການເປັນປະທານຂອງທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ, ປະທານຄະນະກຳມະການລະດັບຊາດປັບປຸງລັດຖະທຳມະນູນ (ຄລຊ); ມີທ່ານຮອງປະທານ ແລະ ບັນດາທ່ານຄະນະກຳມະການລະດັບຊາດປັບປຸງລັດຖະທຳມະນູນປີ 2015, ກອງເລຂາ ແລະ ອະນຸກຳມະການຕ່າງໆຂອງ ຄລຊ, ການນຳ ແລະ ພະນັກງານຫຼັກແຫຼ່ງຈາກພາກສ່ວນຕ່າງໆໃນຂົງເຂດອົງການພັກ, ແນວລາວສ້າງຊາດ, ສະຫະພັນນັກຮົບ

ອ່ານຕໍ່ໜ້າ 11

## ກະກຽມປະເມີນຜົນການຈັດຕັ້ງປະຕິບັດລັດຖະທຳມະນູນ ສະບັບປີ 2015 ຢູ່ແຂວງ



(ສພຊ) - ວັນທີ 26 ມິຖຸນາ 2024 ທີ່ສະພາແຫ່ງຊາດ ໄດ້ມີກອງປະຊຸມພົບປະບັນດາທ່ານປະທານສະພາປະຊາຊົນຂັ້ນແຂວງເພື່ອປຶກສາຫາລືກ່ຽວກັບການປະເມີນຜົນການຈັດຕັ້ງປະຕິບັດລັດຖະທຳມະນູນສະບັບປີ 2015 ໂດຍການເປັນປະທານຂອງທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ, ປະທານຄະນະກຳມະການລະດັບຊາດປັບປຸງລັດ

ອ່ານຕໍ່ໜ້າ 4

## ຄາດຄະເນເດືອນກໍລະກົດ 2025 ຈະປະກາດໃຊ້ລັດຖະທຳມະນູນສະບັບປັບປຸງໃໝ່



ລັດຖະທຳມະນູນ ແມ່ນແນວທາງຂອງພັກກຳອຳນາດທີ່ຖືກຫັນເປັນກົດໝາຍພື້ນຖານຂອງຊາດ, ເປັນພາຫະນະທີ່ສຳຄັນພື້ນຖານໃນການປົກປ້ອງສິດ ແລະ ຜົນປະໂຫຍດຂອງຊົນຊັ້ນກຳອຳນາດ, ຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ຂອງປະເທດ. ລັດຖະທຳມະນູນແຫ່ງ ສປປ ລາວ ສະບັບທຳອິດ ໄດ້ປະກາດໃຊ້ໃນວັນທີ 15 ສິງຫາ 1991 ຜ່ານການຈັດຕັ້ງປະຕິບັດກໍໄດ້ມີການປັບປຸງມາແລ້ວ 2 ຄັ້ງຄື: ຄັ້ງທີ 1 ປີ 2003, ຄັ້ງທີ 2 ປີ 2015; ໃນຕະຫຼອດໄລຍະດັ່ງກ່າວ, ລັດເຮົາກໍໄດ້ຜັນຂະຫຍາຍລັດຖະທຳມະນູນເປັນກົດໝາຍໃນຂົງເຂດຕ່າງໆຈຳນວນ 167 ສະບັບ ໃນນີ້, ຂົງເຂດເສດຖະກິດ 75 ສະບັບ, ຂົງເຂດວັດທະນະທຳ-ສັງຄົມ 42 ສະບັບ, ຂົງເຂດການປົກຄອງ ແລະ ຍຸຕິທຳ 32 ສະບັບ, ຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ 13 ສະບັບ, ຂົງເຂດຕ່າງປະເທດ 5 ສະບັບ ເຊິ່ງລັດຖະທຳ

ອ່ານຕໍ່ໜ້າ 3

## ສະພາແຫ່ງຊາດ ເນັ້ນ 8 ບັນຫາ ໃຫ້ລັດຖະບານເອົາໃຈໃສ່ໃນທິດທາງແຜນການ 6 ເດືອນທ້າຍປີ



(ສພຊ) - ຕອນບ່າຍວັນທີ 19 ມິຖຸນາ 2024 ທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ ໄດ້ຖະແຫຼງຂ່າວກ່ຽວກັບຜົນການພິຈາລະນາວຽກງານຂອງລັດຖະບານໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາທີ່ຕິດພັນກັບການຈັດຕັ້ງປະຕິບັດສອງວາລະແຫ່ງຊາດ ໄລຍະ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2024 ແລະ ຜົນການພິຈາລະນາບົດລາຍງານຂອງອົງການກວດສອບແຫ່ງລັດ ກ່ຽວກັບການແກ້ໄຂຜົນການກວດສອບປະຈຳປີ 2023 ຕາມມະຕິຂອງສະພາແຫ່ງຊາດ ສະບັບເລກທີ 114/ສພຊ, ລົງວັນທີ 21 ພະຈິກ 2023 ໃຫ້ຮັບຊາບຢ່າງທົ່ວເຖິງກັນ ເຊິ່ງທ່ານກ່າວວ່າ: ກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ IX ໃນວາລະພິຈາລະນາວຽກງານຂອງລັດຖະບານກອງປະຊຸມໄດ້ຮັບຟັງການລາຍງານໂດຍສັງເຂບຂອງທ່ານນາຍົກລັດຖະມົນຕີກ່ຽວກັບການຈັດຕັ້ງ

ອ່ານຕໍ່ໜ້າ 4

## ຮອງປະທານສະພາແຫ່ງຊາດ ປາໄສໃນກອງປະຊຸມ RCEP 2024



ອ່ານຕໍ່ໜ້າ 3

## ມອບ-ຮັບເງິນຊ່ວຍເຫຼືອຈາກກອງທຶນຊ່ວຍເຫຼືອສັງຄົມ




(ສພຊ) - ວັນທີ 27 ມິຖຸນາ 2024 ທີ່ສະພາແຫ່ງຊາດ, ທ່ານ ນາງ ດຣ. ວິພາວັນ ພົມວິຫານ ປະທານກອງທຶນຊ່ວຍເຫຼືອສັງຄົມຂອງສະພາແຫ່ງຊາດ ໄດ້ມອບເງິນຈຳນວນ 192.66 ລ້ານກີບ ໃນນີ້, ສະພາແຫ່ງຊາດ 50 ລ້ານກີບ ເພື່ອນຳໄປຊ່ວຍເຫຼືອແກ້ໄຂຜົນກະທົບຈາກໄພພິບັດ, ພະແນກສາທາລະນະສຸກແຂວງວຽງຈັນ 42.66 ລ້ານກີບ ເພື່ອນຳໄປມອບຕໍ່ໃຫ້ແກ່ສູນບຳບັດຢາເສບຕິດໂພນໂຮງ ແລະ

ອ່ານຕໍ່ໜ້າ 3

ນົກອີອ້ຽງກິນໝາກໂພໄຮ ແຊວໆ... (ໜ້າ 8)




ອາຫານຂອງແຕ່ລະກຸ່ມເລືອດ... (ໜ້າ 9)



ສະພາແຫ່ງຊາດ... (ໜ້າ 10)




ການພັດທະນາ... (ໜ້າ 11)

# ກຸ່ມການສຶກສາແສງສະຫວັນ ມອບໂທລະພາບໃຫ້ສະພາແຫ່ງຊາດ




(ສພຊ) - ຕອນບ່າຍວັນອັງຄານທີ 25 ມິຖຸນາຜ່ານມາ, ທ່ານ ປອ. ຄຳແສນ ສີສະວົງ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 9 ແຂວງຊຽງຂວາງ, ປະທານກຸ່ມການສຶກສາແສງສະຫວັນ ໄດ້ມອບໂທລະພາດຍີ່ຫໍ້ຊຳຊຸງ ຈຳນວນ 01 ໜ່ວຍ ມູນຄ່າ 55 ລ້ານກີບ ເພື່ອໝູນໃຊ້ເຂົ້າໃນວຽກງານມູນເຊື້ອ ແລະ ປະຫວັດສາດຂອງສະພາແຫ່ງຊາດ, ຕາງໜ້າກ່າວຮັບໂດຍທ່ານ ນາງ ອຳໄພວອນ ລ້ອມບຸນແພງ ເລຂາທິການສະພາແຫ່ງຊາດ ເຊິ່ງມີພາກສ່ວນກ່ຽວຂ້ອງເຂົ້າຮ່ວມ; ທ່ານ ນາງ ອຳໄພວອນ ລ້ອມບຸນແພງ ໄດ້ກ່າວສະແດງຄວາມຂອບໃຈເປັນຢ່າງສູງຕໍ່ການປະກອບ ສ່ວນເຂົ້າໃນວຽກງານດັ່ງກ່າວໃນຄັ້ງນີ້.

**(ນາງ ອາລິນ ສຸພົມມະປະກິດ)**

# ຄຂລ ມອບເຄື່ອງນຸ່ງຫົ່ມ 10,000 ຊຸດ ໃຫ້ສະພາແຫ່ງຊາດ



(ສພຊ) - ວັນພຸດທີ 26 ມິຖຸນາ 2024 ທີ່ສະພາແຫ່ງຊາດ ໄດ້ມີພິທີມອບ-ຮັບເຄື່ອງນຸ່ງຫົ່ມຈາກສູນລວມ ຄຣິສຕະຈັກຂ່າວປະເສີດ ສປປ ລາວ (ຄຂລ) ໃຫ້ແກ່ສະພາແຫ່ງຊາດ ເຊິ່ງກ່າວມອບໂດຍທ່ານ ສຈ. ຄຳແດງ ກຸນທະປັນຍາ ປະທານບໍລິຫານສູນລວມ ຄຂລ ແລະ ກ່າວຮັບໂດຍທ່ານ ຄຳຈັນ ໂສຕາປະເສີດ ປະທານກຳມາທິການບັນດາເຜົ່າ, ມີພາກສ່ວນກ່ຽວຂ້ອງເຂົ້າຮ່ວມເປັນສັກຂີພະຍານ; ເຄື່ອງນຸ່ງຫົ່ມທີ່ນຳມາມອບໃນຄັ້ງນີ້ ມີຈຳນວນ 10,000 ຊຸດ ລວມມູນຄ່າ 1,152 ລ້ານກີບ ເຊິ່ງໄດ້ມາຈາກການປະກອບສ່ວນຂອງຊາວສາສະນິກະຊົນຄຣິສຕຽນຂອງສູນລວມ ຄຂລ ແລະ ສະມາຄົມນັກທຸລະກິດຊາວຈີນ.

ທ່ານ ຄຳຈັນ ໂສຕາປະເສີດ ໄດ້ສະແດງຄວາມຊົມເຊີຍ ແລະ ຂອບໃຈເປັນຢ່າງສູງຕໍ່ການຊ່ວຍເຫຼືອຂອງສູນລວມຄຣິສຕະຈັກຂ່າວປະເສີດ ສປປ ລາວ ພ້ອມທັງແຈ້ງໃຫ້ຊາບວ່າຈະນຳເອົາເຄື່ອງນຸ່ງຫົ່ມເຫຼົ່ານີ້ແບ່ງປັນໃຫ້ແກ່ 18 ເຂດເລືອກຕັ້ງທົ່ວປະເທດເພື່ອໄປແຈກຢາຍຊ່ວຍເຫຼືອບັນເທົາທຸກພໍ່ແມ່ປະຊາຊົນ, ເດັກນ້ອຍ ແລະ ຜູ້ດ້ອຍໂອກາດຢູ່ເຂດຫ່າງໄກສອກຫຼີກ ແລະ ອີກຈຳນວນໜຶ່ງຈະເກັບໄວ້ເປັນອັນລວມເພື່ອໃຫ້ບັນດາທ່ານການນຳສະພາແຫ່ງຊາດ ໄດ້ນຳໄປຊ່ວຍເຫຼືອປະຊາຊົນໃນເວລາລົງພົບປະຢູ່ທ້ອງຖິ່ນຕ່າງໆ.

ໃນໄລຍະຜ່ານມາ, ສູນລວມ ຄຂລ ໄດ້ມອບເຄື່ອງນຸ່ງຫົ່ມ, ເຂົ້າສານ, ອາຫານແຫ້ງ ແລະອື່ນໆ ໃຫ້ແກ່ກຳມາທິການບັນດາເຜົ່າ ເພື່ອໄປແຈກຢາຍຊ່ວຍເຫຼືອພໍ່ແມ່ປະຊາຊົນຜູ້ທຸກຍາກ, ຜູ້ຖືກກະທົບຈາກໄພທຳມະຊາດຕ່າງໆຢູ່ບັນດາເຂດເລືອກຕັ້ງ ເຊິ່ງລວມມູນຄ່າເປັນຈຳນວນເງິນຫຼາຍຮ້ອຍລ້ານກີບ.

**(ອານຸສອນ ພູມມີທອນ)**

# ປະທານ ກວທສ ຕ້ອນຮັບການເຂົ້າຢ້ຽມ ຂໍ່ານັບຂອງຜູ້ຕາງໜ້າຈາກອົງການ UNICEF



(ສພຊ) - ໃນຕອນບ່າຍຂອງວັນທີ 21 ມິຖຸນາ 2024 ທີ່ສະພາແຫ່ງຊາດ, ທ່ານ ນາງ ທຸມມາລີ ວົງພະຈັນ ຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການວັດທະນະທຳ-ສັງຄົມ (ກວທສ) ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບອຳລາຂອງທ່ານ ນາງ ດຣ. ເພຍ ເຣເບນໂລ ບຣິດໂຕ (Dr. Pia Rebello Britto) ຜູ້ຕາງໜ້າຈາກອົງການ UNICEF ປະຈຳ ສປປ ລາວ.

ທ່ານ ນາງ ທຸມມາລີ ວົງພະຈັນ ໄດ້ກ່າວສະແດງຄວາມຍິນດີຕ້ອນຮັບ ແລະ ສະແດງຄວາມຊົມເຊີຍຢ່າງສຸດໃຈຕໍ່ທ່ານ ນາງ ດຣ. ເພຍ ເຣເບນໂລ ບຣິດໂຕ ທີ່ໄດ້ສຳເລັດພາລະໜ້າທີ່ຢູ່ ສປປ ລາວ ພ້ອມທັງຕີລາຄາສູງຕໍ່ການພົບປະໃນຄັ້ງນີ້ ເຊິ່ງເປັນການປະກອບສ່ວນເສີມຂະຫຍາຍສາຍພົວພັນຮ່ວມມືລະຫວ່າງສະພາແຫ່ງຊາດ ເວົ້າລວມ, ເວົ້າສະເພາະ ກຳມາທິການວັດທະນະທຳ-ສັງຄົມ ກັບ ອົງການ UNICEF ໃຫ້ເປັນຮູບປະທຳຍິ່ງໆຂຶ້ນ; ສະແດງຄວາມຊົມເຊີຍ, ຂອບໃຈ ແລະຕີລາຄາສູງຕໍ່ການປະກອບສ່ວນອັນໃຫຍ່ຫຼວງຂອງທ່ານ ນາງ ດຣ. ເພຍ ເຣເບນໂລ ບຣິດໂຕ ໃນການເສີມຂະຫຍາຍສາຍພົວພັນຮ່ວມມືລະຫວ່າງ ສປປ ລາວ ເວົ້າລວມ, ເວົ້າສະເພາະ ສະພາແຫ່ງຊາດ ກັບ ອົງການ UNICEF ຕະຫຼອດໄລຍະຜ່ານມາໂດຍສະເພາະແມ່ນການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ ກໍຄືກຳມາທິການວັດທະນະທຳ-ສັງຄົມ ໄດ້ມີບັນຍາກາດອັນໃໝ່ທີ່ດີຂຶ້ນ ແລະ ມີຜົນສຳເລັດໃຫຍ່ຫຼວງກວ່າເກົ່າ ໂດຍສະເພາະແມ່ນດ້ານການສ້າງແລະປັບປຸງນິຕິກຳ, ດ້ານການຕິດຕາມກວດກາ, ດ້ານການຕົກລົງບັນຫາສຳຄັນຂອງຊາດ, ດ້ານການສ້າງຄວາມເຂັ້ມແຂງໃຫ້ແກ່ສະມາຊິກສະພາແຫ່ງຊາດ ແລະ ພະນັກງານ-ລັດຖະກອນຂອງກຳມາທິການວັດທະນະທຳ-ສັງຄົມ ລວມທັງການເຄື່ອນໄຫວວຽກງານຕ່າງປະເທດ ເຊິ່ງຜົນງານດັ່ງກ່າວ ຄະນະປະຈຳສະພາແຫ່ງຊາດ, ກຳມາທິການວັດທະນະທຳ-ສັງຄົມ ໄດ້ຕີລາຄາສູງ, ຍ້ອງຍໍຊົມເຊີຍ ແລະ ຫວັງຢ່າງຍິ່ງວ່າຈະສືບຕໍ່ໃຫ້ການຮ່ວມມືຊ່ວຍເຫຼືອ ແລະ ປະກອບສ່ວນຕາມຄວາມຮັບຜິດຊອບຂອງທ່ານ ນາງ ດຣ. ເພຍ ເຣເບນໂລ ບຣິດໂຕ ເຂົ້າໃນການຊ່ວຍສະໜັບສະໜູນການພົວພັນຮ່ວມມືລະຫວ່າງສອງອົງການໃນຕໍ່ໜ້າ.

ໂອກາດດັ່ງກ່າວ, ທ່ານ ນາງ ດຣ. ເພຍ ເຣເບນໂລ ບຣິດໂຕ ກໍໄດ້ກ່າວສະແດງຄວາມຂອບໃຈເປັນຢ່າງສູງຕໍ່ທ່ານ ນາງ ທຸມມາລີ ວົງພະຈັນ ທີ່ໃຫ້ການຕ້ອນຮັບຢ່າງອົບອຸ່ນ ພ້ອມທັງໄດ້ມອບປຶ້ມບັນທຶກຈຳນວນ 450 ຫົວ ແລະ ພິມແຜ່ນພັບມະຕິ (ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານກ່ຽວກັບການຈັດຕັ້ງປະຕິບັດຍຸດທະສາດປົກປ້ອງສັງຄົມແຫ່ງຊາດໄລຍະປີ 2020-2023 ສະບັບເລກທີ 97/ສພຊ, ລົງວັນທີ 18 ກໍລະກົດ 2023 ແລະ ມະຕິກົດລົງຂອງລັດຖະບານ ວ່າດ້ວຍນະໂຍບາຍ ແລະ ມາດຕະການແກ້ໄຂບັນຫາການຂາດແຄນຄູສອນ, ການປະລະການຮຽນແລະການສົ່ງເສີມເຂົ້າຮຽນວິຊາຊີບ ສະບັບເລກທີ 09/ລບ, ລົງວັນທີ 17 ກໍລະກົດ 2023) ຈຳນວນມະຕິລະ 500 ຫົວ ທີ່ອົງການ UNICEF ປະຈຳ ສປປ ລາວ ໄດ້ສະໜັບສະໜູນການອອກແບບ ແລະ ຈັດພິມ ເນື່ອງໃນໂອກາດການສະເຫຼີມສະຫຼອງຄົບຮອບ 50 ປີ ແຫ່ງການຮ່ວມມືລະຫວ່າງລັດຖະບານແຫ່ງ ສປປ ລາວ ກັບ ອົງການ UNICEF ເພື່ອມອບໃຫ້ແກ່ສະມາຊິກສະພາໃນຂອບເຂດທົ່ວປະເທດ; ພ້ອມດຽວກັນນັ້ນ, ທ່ານ ນາງ ທຸມມາລີ ວົງພະຈັນ ກໍໄດ້ມອບໃບຍ້ອງຍໍຂອງຄະນະປະຈຳສະພາແຫ່ງຊາດ ໃຫ້ແກ່ທ່ານນາງດຣ. ເພຍ ເຣເບນໂລ ບຣິດໂຕ ທີ່ໄດ້ປະກອບສ່ວນອັນໃຫຍ່ຫຼວງເຂົ້າໃນການເສີມສ້າງສາຍພົວພັນມິດຕະພາບ ແລະ ການຮ່ວມມືລະຫວ່າງ ສປປລາວ ກັບ ອົງການ UNICEF ໃຫ້ໄດ້ຮັບການພັດທະນາຍິ່ງໆຂຶ້ນ ເວົ້າລວມ, ເວົ້າສະເພາະລະຫວ່າງອົງການນິຕິບັນຍັດກັບອົງການຈັດຕັ້ງສາກົນ.

# ມອບ-ຮັບປຶ້ມການຮ່ວມມືທີ່ມີຄຸນຄ່າສູງ



(ສພຊ) - ເພື່ອຕ້ອນຮັບວັນສຳຄັນຂອງຊາດ, ປະກອບສ່ວນໃຫ້ສັງຄົມໄດ້ຄົ້ນຄວ້າ-ຮັບຮູ້ບົດຮຽນພາຍໃນແລະຕ່າງປະເທດ ທັງເປັນການເພີ່ມທະວີສາຍພົວພັນຮ່ວມມືລະຫວ່າງ ລາວ-ຫວຽດນາມ, ຫວຽດນາມ-ລາວ; ສຳນັກພິມ ແລະ ຈຳໜ່າຍປຶ້ມແຫ່ງລັດ ຈຶ່ງໄດ້ມອບປຶ້ມການຮ່ວມມືທີ່ມີຄຸນຄ່າສູງແຕ່ລະຂົງເຂດເຊັ່ນ: ເສດຖະກິດ, ວັດທະນະທຳ-ສັງຄົມ, ການເມືອງ-ແນວຄິດ ແລະ ຂົງເຂດການຄົ້ນຄວ້າອື່ນໆ ຈຳນວນ 15 ຫົວເລື່ອງ, ຫົວເລື່ອງລະ 10 ຊຸດ ລວມມູນຄ່າ 22.2 ລ້ານກີບ ໃຫ້ແກ່ສະພາແຫ່ງຊາດ.

ພິທີມອບ-ຮັບໄດ້ຈັດຂຶ້ນເມື່ອວັນທີ 21 ມິຖຸນາຜ່ານມາ ທີ່ສະພາແຫ່ງຊາດ ເຊິ່ງກ່າວມອບໂດຍທ່ານ ໄຊຍະພອນ ອານຸລາດ ຜູ້ອຳນວຍການສຳນັກພິມ ແລະ ຈຳໜ່າຍປຶ້ມແຫ່ງລັດ ແລະ ກ່າວຮັບໂດຍທ່ານ ນາງ ປານຄຳ ຂະຫຍອງເອກ ຫົວໜ້າສູນເຝິກອົບຮົມ ແລະ ຂໍ້ມູນຂ່າວສານ, ມີບັນດາພະນັກງານຈາກສອງຝ່າຍເຂົ້າຮ່ວມເປັນສັກຂີພະຍານ.

**(ສອນສັກ ວັນວິໄຊ)**



## ຮອງປະທານ..

(ຕໍ່ຈາກໜ້າ 1)

(ສພຊ) - ວັນທີ 21 ມິຖຸນາຜ່ານມາ, ຄະນະຜູ້ແທນສະພາແຫ່ງຊາດລາວ ນຳໂດຍທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ ໄດ້ເຂົ້າຮ່ວມພິທີເປີດ ແລະ ກ່າວຄຳປາໄສໃນກອງປະຊຸມເວທີຄູ່ຮ່ວມມືເສດຖະກິດຮອບດ້ານ (RCEP) 2024 ທີ່ເມືອງຫວາງຊານ ແຂວງອານຮຸຍ ສປ ຈີນ. ໃນກອງປະຊຸມດັ່ງກ່າວ, ທ່ານໄດ້ມີຄຳເຫັນກ່ຽວກັບການຮ່ວມມືລະຫວ່າງລັດຖະບານທ້ອງຖິ່ນບັນດາປະເທດ ແລະ ບັນດາຕົວເມືອງມິດຕະພາບ ເຊິ່ງໄດ້ເນັ້ນເຖິງຄວາມສຳຄັນຂອງກອງປະຊຸມຄັ້ງນີ້ ເປັນການຊຸກຍູ້ການປະຕິບັດສັນຍາຄູ່ຮ່ວມມືເສດຖະກິດຮອບດ້ານໃນພາກພື້ນ RCEP ໃຫ້ມີຄຸນນະພາບສູງ, ຊຸກຍູ້ການເພີ່ມທະວີຄວາມເຂົ້າອົກເຂົ້າໃຈຕໍ່ບັນດາທ້ອງຖິ່ນຂອງບັນດາປະເທດສະມາຊິກ RCEP, ຄົ້ນຄວ້າກາລະໂອກາດໃນການດຳເນີນທຸລະກິດ, ຊອກຫາຄູ່ຮ່ວມມືທີ່ດີ, ຊຸກຍູ້ການພົວພັນຮ່ວມມືຢ່າງເລິກເຊິ່ງ ແລະ ກວ້າງຂວາງ ໃຫ້ບັນລຸໄດ້ໝາກຜົນໂດຍຕ່າງຝ່າຍຕ່າງມີຜົນປະໂຫຍດລະຫວ່າງບັນດາປະເທດໃນພາກພື້ນ RCEP ໂດຍສະເພາະ ສປປ ລາວ ກໍໄດ້ຮັບຜົນປະໂຫຍດໃນຖານະທີ່ເປັນສະມາຊິກ ແລະ ໄດ້ຮັບຜົນປະໂຫຍດໃນການຈັດຕັ້ງປະຕິບັດສັນຍາໃນຂອບນີ້ຈຳນວນໜຶ່ງ. ນອກນັ້ນ, ທ່ານຍັງໄດ້ມີຄຳເຫັນກ່ຽວກັບການຮ່ວມມືລະຫວ່າງ ສປປ ລາວ ກັບ ສປ ຈີນ ໃນໄລຍະຜ່ານມາ ທີ່ໄດ້ມີການພົວພັນກັນນັບມື້ນັບເລິກເຊິ່ງ ຕາມທິດ 4 ດີ (ເພື່ອນທີ່ດີ, ສະຫາຍທີ່ດີ, ບ້ານໃກ້ເຮືອນຄຽງທີ່ດີ ແລະ ຄູ່ຮ່ວມມືທີ່ດີ) ແລະ ສປປ ລາວ ຍາມໃດກໍສະໜັບສະໜູນນະໂຍບາຍຈີນດຽວ, ສະໜັບສະໜູນ ແລະ ຕັ້ງໜ້າເຂົ້າຮ່ວມຂໍ້ລິເລີ່ມຂອງສະຫາຍ ສີຈິ້ນຜິງ ປະທານປະເທດ ແຫ່ງ ສປ ຈີນ ກ່ຽວກັບໜຶ່ງແລວທາງໜຶ່ງເສັ້ນທາງ, ການພັດທະນາໂລກ, ຄວາມໝັ້ນຄົງໂລກ ແລະ ອະລິຍະທຳໂລກ; ພິເສດແມ່ນໄດ້ມີການຈັດຕັ້ງຜັນຂະຫຍາຍແຜນແມ່ບົດວ່າດ້ວຍການສ້າງຄູ່ຮ່ວມຊາຕາກຳ ລາວ-ຈີນ ເຊິ່ງສອງປະເທດໄດ້ມີການຮ່ວມມືທາງດ້ານການພັດທະນາຊັບພະຍາກອນມະນຸດ, ດ້ານເສດຖະກິດ, ການຄ້າ, ການລົງທຶນ, ການທ່ອງທ່ຽວ ແລະ ອື່ນໆ ໃນນັ້ນ, ລັດຖະບານຂອງສອງປະເທດ ໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດໂຄງການເສັ້ນທາງລົດໄຟ ລາວ-ຈີນ, ໂຄງການເສັ້ນທາງດ່ວນ ວຽງຈັນ-ວັງວຽງ, ເຂດພັດທະນາກວມລວມໄຊເສດຖາ, ໂຄງການປັບປຸງໂຮງໝໍມະໂຫສົດ, ໂຄງການຊ່ວຍເຫຼືອແກ້ໄຂຄວາມທຸກຍາກຢູ່ທ້ອງຖິ່ນຂອງສປປລາວ ເຊິ່ງພວມນຳເອົາຜົນສຳເລັດ ແລະ ຜົນປະໂຫຍດມາສູ່ປະຊາຊົນລາວ ໂດຍສະເພາະເປັນການປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງ ສປປ ລາວ. ສຳລັບການພົວພັນຢູ່ຂັ້ນທ້ອງຖິ່ນໃນໄລຍະຜ່ານມາກໍນັບມື້ນັບເລິກເຊິ່ງ ຫຼາຍແຂວງໄດ້ມີການແຮກສ່ຽວກັບແຂວງຂອງ ສປ ຈີນ, ສະເພາະແຂວງອານຮຸຍ ກໍໄດ້ມີການເຊັນບົດບັນທຶກການພົວພັນຮ່ວມມືກັບແຂວງອັດຕະປື ແລະ ຜ່ານມາກໍໄດ້ມີບໍລິສັດຈາກແຂວງອານຮຸຍຈຳນວນໜຶ່ງ ເຂົ້າໄປລົງທຶນ ຢູ່ ສປປ ລາວ ຈຶ່ງໄດ້ສະເໜີໃຫ້ມີການຮ່ວມມືກັບແຂວງອື່ນໆຂອງ ສປປລາວເພີ່ມຕື່ມ ເພື່ອໃຫ້ບັນດາບໍລິ ສັດຂອງ ສປ ຈີນ ທີ່ມີຄວາມສາມາດ ແລະ ມີຄວາມສົນໃຈ ເຂົ້າມາລົງທຶນຢູ່ ສປປ ລາວ ຫຼາຍຂຶ້ນ.

ນອກຈາກເຂົ້າຮ່ວມກອງປະຊຸມ ແລະ ກ່າວປາໄສແລ້ວ, ຄະນະຜູ້ແທນສະພາແຫ່ງຊາດລາວ ຍັງໄດ້ພົບປະໂອ້ລົມກັບທ່ານກົງສຸນໃຫຍ່ປະຈຳກວາງໂຈ ແລະ ໄປຢ້ຽມຢາມ, ພົບປະໂອ້ລົມພະນັກງານສະຖານກົງສຸນໃຫຍ່ປະຈຳນະຄອນຊຽງໄຮ, ຢ້ຽມຊົມຫໍພິພິທະພັນປະຫວັດສາດ ແລະ ພິພິທະພັນຊາ ເຊີຍຫຼີງຕ້າ ຂອງເມືອງຫວາງຊານ ແລະ ສະ ຖານທີ່ທ່ອງທ່ຽວທີ່ມີຊື່ສຽງຈຳນວນໜຶ່ງຂອງແຂວງອານຮຸຍອີກດ້ວຍ.




## ຄາດຄະເນ..

(ຕໍ່ຈາກໜ້າ 1)

ມະນູນ ແລະ ກົດໝາຍເຫຼົ່ານັ້ນ ໄດ້ກາຍເປັນພາຫະນະອັນແຫຼມຄົມໃນການດັດປັບການພົວພັນສັງຄົມຕາມແນວທາງປ່ຽນແປງໃໝ່ຢ່າງຮອບດ້ານມີຫຼັກການຂອງພັກເຮົາ ເຮັດໃຫ້ການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມດ້ວຍກົດໝາຍ ໄດ້ມີຄວາມເຂັ້ມງວດ ແລະ ສັກສິດເປັນກ້າວໆ, ສະຕິເຄົາລົບ ແລະ ປະຕິບັດລັດຖະທຳມະນູນ ແລະ ກົດໝາຍໃນທົ່ວສັງຄົມ ໄດ້ຮັບການຍົກສູງຂຶ້ນ ເຊິ່ງໄດ້ສ້າງເງື່ອນໄຂພື້ນຖານໃຫ້ແກ່ການສ້າງລັດ ສປປ ລາວ ໃຫ້ເປັນລັດທີ່ປົກຄອງດ້ວຍກົດໝາຍເທື່ອລະກ້າວ. ຜ່ານການຈັດຕັ້ງປະຕິບັດເຫັນວ່າ ມີບາງບົດບັນຍັດຈະໄດ້ຄົ້ນຄວ້າປັບປຸງໃຫ້ສອດຄ່ອງກັບສະພາບການໃໝ່.

ໃນດ້ານອື່ນ, ເພື່ອຈັດຕັ້ງປະຕິບັດມະຕິຂອງຄະນະບໍລິຫານງານສູນກາງພັກ ສະບັບເລກທີ 05/ຄບສພ, ລົງວັນທີ 05 ກັນຍາ 2023 ວ່າດ້ວຍການສືບຕໍ່ຍູ້ແຮງການຜັນຂະຫຍາຍແນວທາງປ່ຽນແປງໃໝ່ສູ່ລວງເລິກ, ສ້າງການຫັນປ່ຽນທີ່ແຂງແຮງ, ເລິກເຊິ່ງ ແລະ ຮອບດ້ານ ໃນການນຳພາຂອງພັກ ແລະ ມະຕິກົມການເມືອງສູນກາງພັກ ສະບັບເລກທີ 04/ກມສພ, ລົງວັນທີ 11 ເມສາ 2024 ວ່າດ້ວຍການສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງໃນໄລຍະໃໝ່ ໃຫ້ເປັນຮູບປະທຳ; ສະນັ້ນ, ຈຶ່ງມີຄວາມຈຳເປັນຢ່າງພາວະວິໄສທີ່ລັດເຮົາຈະຕ້ອງໄດ້ຄົ້ນຄວ້າ ແລະ ປັບປຸງລັດຖະທຳມະນູນ ແຫ່ງ ສປປ ລາວ ສະບັບປີ 2015 ໃຫ້ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງຂອງພັກແລະລັດເຮົາໃນໄລຍະໃໝ່.

ການປັບປຸງລັດຖະທຳມະນູນ ແຫ່ງ ສປປ ລາວ ຄັ້ງນີ້ແມ່ນແນໃສ່:

1. ສືບຕໍ່ຜັນຂະຫຍາຍແນວທາງປ່ຽນແປງໃໝ່ຢ່າງຮອບດ້ານມີຫຼັກການຂອງພັກ ເປັນຂໍ້ບັນຍັດຂອງລັດຖະທຳມະນູນ ແຫ່ງ ສປປ ລາວ ສະບັບໃໝ່ ເປັນຕົ້ນ ມະຕິຄະນະບໍລິຫານງານສູນກາງພັກວ່າດ້ວຍການສືບຕໍ່ຍູ້ແຮງການຜັນຂະຫຍາຍແນວທາງປ່ຽນແປງໃໝ່ສູ່ລ່ວງເລິກ ສ້າງການຫັນປ່ຽນທີ່ແຂງແຮງ, ເລິກເຊິ່ງ ແລະ ຮອບດ້ານ ໃນການນຳພາຂອງພັກ; ມະຕິກົມການເມືອງສູນກາງພັກ ກ່ຽວກັບການສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງໃນໄລຍະໃໝ່.

2. ປັບປຸງບາງບົດບັນຍັດກ່ຽວກັບລະບົບອົງການອຳນາດແຫ່ງລັດຂັ້ນຕ່າງໆ ເປັນຕົ້ນ ອົງການບໍລິຫານລັດຂັ້ນທ້ອງຖິ່ນ ໃຫ້ມີຄວາມສອດຄ່ອງກັບໜ້າທີ່ການເມືອງຂອງພັກ ແລະ ລັດໃນໄລຍະໃໝ່, ສາມາດຕອບສະໜອງກັບຄວາມຮຽກຮ້ອງຕ້ອງການໃນການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມດ້ວຍກົດໝາຍຢ່າງມີປະສິດທິພາບ, ປະສິດທິຜົນສູງຂຶ້ນ, ຮັບປະກັນການປະຕິບັດສອງໜ້າທີ່ຍຸດທະສາດຄື: ປົກປັກຮັກສາ ແລະ ສ້າງສາປະເທດຊາດ ຂຶ້ນສູ່ຈຸດໝາຍທີ່ພັກເຮົາວາງໄວ້.

3. ລັດຖະທຳມະນູນສະບັບໃໝ່ນີ້ ຕ້ອງສອດຄ່ອງກັບເນື້ອໃນພື້ນຖານຂອງໂຄງການການເມືອງຂອງພັກ ແລະ ມະຕິຕ່າງໆຂອງບັນດາກອງປະຊຸມໃຫຍ່ຂອງພັກເຮົາໃນຕໍ່ໜ້າ.

4. ເປັນບ່ອນອີງພື້ນຖານຮັບປະກັນໃຫ້ແກ່ການສ້າງ ແລະ ປັບປຸງກົດໝາຍໃນຕໍ່ໜ້າ ໃຫ້ເປັນລະບົບຄົບຊຸດ, ສອດຄ່ອງ, ຮັດກຸມ ແລະ ສາມາດຈັດຕັ້ງປະຕິບັດໄດ້.

5. ສູ້ຊົນປັບປຸງລັດຖະທຳມະນູນສະບັບໃໝ່ໃຫ້ສຳເລັດພາຍໃນປີ 2025 ແລະ ສາມາດນຳເຂົ້າພິຈາລະນາ, ຮັບຮອງ ໃນກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາແຫ່ງຊາດຊຸດທີ IX.

ການປັບປຸງລັດຖະທຳມະນູນເທື່ອນີ້ ແມ່ນສຸມໃສ່ຄົ້ນຄວ້າ ແລະ ປັບປຸງບາງໝວດ, ບາງມາດຕາທີ່ຈຳເປັນ ເປັນຕົ້ນແມ່ນໝວດກ່ຽວກັບການປົກຄອງທ້ອງຖິ່ນ ແລະ ອາດຈະຄົ້ນຄວ້າສະເໜີເພີ່ມບາງມາດຕາ ຫຼື ບາງຂໍ້ບັນຍັດໃໝ່ ທີ່ເຫັນວ່າມີຄວາມສຳຄັນ ແລະ ຈຳເປັນ.

ທິດຊີ້ນຳໃນການປັບປຸງລັດຖະທຳມະນູນ ແຫ່ງ ສປປ ລາວ ສະບັບນີ້ ມີດັ່ງນີ້:

1. ຮັບປະກັນການຍົກສູງບົດບາດນຳພາຂອງພັກປະຊາຊົນປະຕິວັດລາວ ຕິດແໜ້ນກັບການເຊີດຊູບົດບາດຄຸ້ມຄອງຂອງລັດປະຊາທິປະໄຕປະຊາຊົນ ແລະ ການປະຕິບັດສິດເປັນເຈົ້າປະເທດຊາດຂອງປະຊາຊົນລາວບັນດາເຜົ່າ ເຊິ່ງກຳມະກອນ, ກະສິກອນ ແລະ ນັກຮຽນຮູ້ປັນຍາຊົນ ເປັນຫຼັກແຫຼ່ງ.

2. ຮັບປະກັນການປະຕິບັດຫຼັກການລວມສູນປະຊາທິປະໄຕ ຫຼື ອຳນາດເອກະພາບພາຍໃຕ້ການນຳພາຂອງພັກປະຊາຊົນປະຕິວັດລາວ.

3. ມີຈຸດສຸມແລະສອດຄ່ອງກັບມະຕິຂອງຄະນະບໍລິຫານງານສູນກາງພັກ ວ່າດ້ວຍການສືບຕໍ່ຍູ້ແຮງການຜັນຂະຫຍາຍແນວທາງປ່ຽນແປງໃໝ່ ສູ່ລ່ວງເລິກ ສ້າງການຫັນປ່ຽນທີ່ແຂງແຮງ, ເລິກເຊິ່ງ ແລະ ຮອບດ້ານໃນການນຳພາຂອງພັກ ກໍຄືມະຕິກົມການເມືອງສູນກາງພັກວ່າດ້ວຍການສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງໃນໄລຍະໃໝ່.

4. ຮັບປະກັນລັກສະນະວິທະຍາສາດໃນການສ້າງ ແລະ ປັບປຸງນິຕິກຳ ໂດຍມີການປະເມີນຜົນການຈັດຕັ້ງປະຕິບັດລັດຖະທຳມະນູນ; ຄົ້ນຄວ້າ ແລະ ກຳນົດເນື້ອໃນຈຸດສຸມຕົ້ນຕໍທີ່ຈະປັບປຸງໃຫ້ລະອຽດ, ຈະແຈ້ງ; ທາບທາມ ແລະ ລະດົມຄວາມເຫັນ, ສະຕິປັນຍາຂອງທົ່ວລະບົບການເມືອງ, ປະຊາຊົນລາວບັນດາເຜົ່າ, ນັກທຸລະກິດທັງພາກລັດ ແລະ ເອກະຊົນ ລວມທັງນັກລົງທຶນຕ່າງປະເທດຢູ່ ສປປ ລາວ ແລະ ມີການຍາດແຍ່ງບົດຮຽນທີ່ສອດຄ່ອງຂອງຕ່າງປະເທດ ເພື່ອເຮັດໃຫ້ເນື້ອໃນຂອງລັດຖະທຳມະນູນສະບັບໃໝ່ ມີຄວາມຖືກຕ້ອງ, ສອດຄ່ອງ, ຄົບຖ້ວນ, ຮັດກຸມ ແລະ ສາມາດຈັດຕັ້ງປະຕິບັດໄດ້.

5. ສຸມໃສ່ຄົ້ນຄວ້າ, ປັບປຸງເນື້ອໃນໃຫຍ່ທີ່ສຳຄັນຈຳນວນໜຶ່ງຂອງລັດຖະທຳມະນູນຫາກບໍ່ແມ່ນປັບປຸງໝົດສະບັບ ເຊັ່ນ: (1) ບັນຫາການກຳນົດບົດບາດນຳພາຂອງພັກ ຈະຮັກສາຄືເກົ່າ (ມາດຕາ 3 ລັດຖະທຳມະນູນສະບັບປີ 2015) ຫຼື ປັບປຸງໃໝ່ໃຫ້ຈະແຈ້ງກວ່າເກົ່າ; (2) ບັນຫາຈຸດໝາຍສັງຄົມນິຍົມ; (3) ບັນຫາການສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງ ; (4) ບັນຫາການກຳນົດທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງບັນດາອົງການອຳນາດແຫ່ງລັດຂັ້ນສູນກາງ; (5) ບັນ ຫາການກຳນົດການແບ່ງຂັ້ນການປົກຄອງທ້ອງຖິ່ນ ເປັນຕົ້ນຂັ້ນຕາແສງ ລວມທັງການກຳນົດທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່, ສາຍພົວພັນສາຍຕັ້ງ ແລະ ສາຍຂວາງຂອງການປົກຄອງທ້ອງຖິ່ນແຕ່ລະຂັ້ນ; (6) ບັນຫາການແບ່ງຂັ້ນຄຸ້ມຄອງ ລະຫວ່າງສູນກາງ ກັບ ແຂວງ-ນະຄອນຫຼວງ, ລະຫວ່າງແຂວງ-ນະຄອນຫຼວງ ກັບ ຂັ້ນເມືອງ-ນະຄອນ, ຂັ້ນຕາແສງແລະຂັ້ນບ້ານ. ນອກຈາກເນື້ອໃນໃຫຍ່ດັ່ງກ່າວນີ້ແລ້ວ ອາດຈະຄົ້ນຄວ້າ, ປັບປຸງບາງເນື້ອໃນຍ່ອຍທີ່ເຫັນວ່າມີຄວາມສຳຄັນ ແລະ ຈຳເປັນ.

6. ໃຫ້ສົມທົບແໜ້ນລະຫວ່າງການຄົ້ນຄວ້າຂອງຄະນະກຳມະການລະດັບຊາດ ກັບການຍາດແຍ່ງຄວາມຄິດເຫັນ ຂໍ້ສະເໜີຂອງບັນດາຂະແໜງການ ແລະ ອົງການຂັ້ນສູນກາງ ແລະ ທ້ອງຖິ່ນຕ່າງໆ ລວມທັງຍາດແຍ່ງຄວາມຄິດຄວາມເຫັນຂອງພາກທຸລະກິດທັງພາກລັດ ແລະ ເອກະຊົນ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງຕ່າງໆ; ລະດົມຄວາມຄິດຄວາມເຫັນຢ່າງກວ້າງຂວາງຈາກປະຊາຊົນລາວບັນດາເຜົ່າ ດ້ວຍຫຼາຍຮູບການນັບທັງຜ່ານພາຫະນະສື່ມວນຊົນ.

ຄາດຄະເນວ່າກາງເດືອນກໍລະກົດ 2025 ໃຫ້ໄດ້ປະກາດໃຊ້ລັດຖະທຳມະນູນສະບັບປັບປຸງໃໝ່.

(ຄັດຈາກບົດລາຍງານຂອງທ່ານ ສຈ. ປອ. ຈະເລີນ ເຍຍປາວເຮີ ຮອງປະທານສະພາແຫ່ງຊາດ, ຜູ້ປະຈຳການຄະນະກຳມະການລະດັບຊາດປັບປຸງລັດຖະທຳມະນູນກ່ຽວກັບການກະກຽມວຽກງານຮອບດ້ານໃຫ້ແກ່ການປັບປຸງລັດຖະທຳມະນູນສະບັບປີ 2015 ຕໍ່ກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດຊຸດທີ IX ຄັ້ງວັນທີ 17 ມິຖຸນາ 2024)

## ມອບ-ຮັບ..

(ຕໍ່ຈາກໜ້າ 1)

ແຂວງບໍລິຄຳໄຊ 100 ລ້ານກີບ ເພື່ອນຳໄປຊ່ວຍເຫຼືອປະຊາຊົນທີ່ຖືກຜົນກະທົບຈາກພາຍຸພັດເຂົ້າເມືອງຄຳເກີດ; ຕາງໜ້າຮັບມີທ່ານ ນາງ ອຳໄພວອນ ລ້ອມບຸນແພງ ເລຂາທິການສະພາແຫ່ງຊາດ, ທ່ານບຸນສອນ ເພັດດາວັນ ປະທານສະພາປະຊາຊົນແຂວງວຽງຈັນ ແລະ ທ່ານ ປອ. ສຸວັນນີ ໄຊ ຊະນະ ປະທານສະພາປະຊາຊົນແຂວງບໍລິຄຳໄຊ.

**(ນາງ ອາລິນ ສຸພົມມະຟະກົດ)**

## ກະກຽມ...

(ຕໍ່ຈາກໜ້າ 1)

ຖະທຳມະນູນ.

ທ່ານ ປອ. ໄຊສົມພອນ ພົມວິຫານ ກ່າວວ່າ: ຈຸດປະສົງລະດັບຄາດໝາຍຕົ້ນຕໍໃນການປະເມີນຜົນການຈັດຕັ້ງປະຕິບັດລັດຖະທຳມະນູນເທື່ອນີ້ ແມ່ນແນໃສ່ສະຫຼຸບຕີລາຄາໃຫ້ເຫັນໄດ້ຜົນສຳເລັດ, ດ້ານດີ, ດ້ານອ່ອນ-ຂໍ້ຄົງຄ້າງ, ສາເຫດ ແລະ ບົດຮຽນໃນການຈັດຕັ້ງປະຕິບັດລັດຖະທຳມະນູນສະບັບປີ2015 ຂອງບັນດາອົງການອຳນາດລັດຂັ້ນຕ່າງໆ ຕະຫຼອດໄລຍະເກືອບ 10 ປີທີ່ຜ່ານມາ; ພ້ອມກັນນີ້, ໃຫ້ເຫັນໄດ້ໝວດ, ມາດຕາ ຫຼື ບົດບັນຍັດຂອງລັດຖະທຳມະນູນ ທີ່ບໍ່ສອດຄ່ອງ ເຊິ່ງຕ້ອງປັບປຸງ ຫຼື ເພີ່ມໃໝ່ ທັງເປັນການເກັບກຳ, ສັງລວມຄວາມເຫັນ ແລະ ຂໍ້ສະເໜີຕ່າງໆຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ເພື່ອເປັນຂໍ້ມູນຕົວຈິງໃຫ້ແກ່ການຄົ້ນຄວ້າ ແລະ ປັບປຸງລັດຖະທຳມະນູນ.

ທ່ານປະທານກອງປະຊຸມໄດ້ສະເໜີປຶກສາຫາລື, ແລກປ່ຽນຄວາມເຫັນກັບບັນດາປະທານສະພາແຕ່ລະແຂວງໃນການກຳນົດວັນ, ເວລາດຳເນີນກອງປະຊຸມສະໄໝສາມັນເທື່ອທີ 7 ແລະ ກອງປະຊຸມປະເມີນຜົນການຈັດຕັ້ງປະຕິບັດລັດຖະທຳມະນູນຢູ່ແຂວງ ໃຫ້ລະອຽດຈະແຈ້ງ; ຊີ້ນຳຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແລະ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ເປັນເຈົ້າການຊ່ວຍຊີ້ນຳການກະກຽມສະຖານທີ່, ເປົ້າໝາຍເຂົ້າຮ່ວມ ແລະ ສິ່ງອຳນວຍຄວາມສະດວກໃຫ້ແກ່ການດຳເນີນກອງປະຊຸມ ໂດຍມີການແຕ່ງຕັ້ງ ຫຼື ມອບໝາຍໃຫ້ຄະນະເລຂາທິການສະພາປະຊາຊົນຂັ້ນແຂວງ ຮັບຜິດຊອບຊ່ວຍກະກຽມວຽກງານຕົວຈິງດ້ານຕ່າງໆ ໃຫ້ຮັບປະກັນການດຳເນີນກອງປະຊຸມການປະເມີນຜົນການຈັດຕັ້ງປະຕິບັດລັດຖະທຳມະນູນ ໄດ້ຮັບຜົນດີ ແລະ ສຳເລັດທັນຕາມກຳນົດເວລາ; ສຳລັບຄະນະຮັບຜິດຊອບກອງປະຊຸມນັ້ນ, ຄະນະກຳມະການລະດັບຊາດປັບປຸງລັດຖະທຳມະນູນ ຈະແຕ່ງຕັ້ງ ແລະ ມອບໝາຍໃຫ້ຄະນະກຳມະການຈຳນວນໜຶ່ງ, ກອງເລຂາ ແລະ ອະນຸກຳມະການຕ່າງໆ ຂອງຄະນະກຳມະການລະດັບຊາດ ລົງສົມທົບເພື່ອຈັດຕັ້ງປະຕິບັດຕົວຈິງຢູ່ແຕ່ລະແຂວງ.

**(ນາງ ອາລິນ ສຸພົມມະປະດິດ)**

## ສະພາແຫ່ງຊາດ...

(ຕໍ່ຈາກໜ້າ 1)

ປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ ແລະ ແຜນເງິນຕາ ຕິດພັນກັບການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ໄລຍະ6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2024 ແລະ ຂ້າພະເຈົ້າໄດ້ຕາງໜ້າຄະນະປະຈຳສະພາແຫ່ງຊາດ ປະກອບຄຳເຫັນຕໍ່ບົດລາຍງານດັ່ງກ່າວ; ຫຼັງຈາກນັ້ນ, ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ, ລັດຖະມົນຕີກະຊວງການເງິນ ແລະ ຜູ້ວ່າການທະນາຄານແຫ່ງ ສປປ ລາວ ກໍໄດ້ລາຍງານເພີ່ມຕື່ມຕໍ່ກອງປະຊຸມ.

ພາຍຫຼັງທີ່ໄດ້ຮັບຟັງການລາຍງານຂອງລັດຖະບານແລ້ວ, ບັນດາທ່ານສະມາຊິກສະພາແຫ່ງຊາດ ໃນຖານະທີ່ເປັນຕົວແທນແຫ່ງສິດແລະ ຜົນປະໂຫຍດຂອງປະຊາຊົນບັນດາເຜົ່າ ກໍໄດ້ສຸມໃສ່ຄົ້ນຄວ້າ ແລະ ປະກອບຄວາມເຫັນຢ່າງກວ້າງຂວາງ, ເລິກເຊິ່ງ ໄດ້ມີການຊັກຖາມ ຕໍ່ລັດຖະບານ ເຊິ່ງສະມາຊິກລັດຖະບານກໍໄດ້ຊີ້ແຈງໃຫ້ຄວາມກະຈ່າງແຈ້ງຕໍ່ຄຳຊັກຖາມ ແລະ ຕໍ່ບັນຫາຕ່າງໆ ທີ່ສະມາຊິກສະພາແຫ່ງຊາດໄດ້ຍົກຂຶ້ນ ຢ່າງກົງໄປກົງມາ; ພິເສດ, ກອງປະຊຸມຍັງໄດ້ຮັບຟັງການອະທິບາຍຊີ້ແຈງຂອງທ່ານນາຍົກລັດຖະມົນຕີ ແລະ ທ່ານປະທານສະພາແຫ່ງຊາດ ກໍໄດ້ມີຄຳເຫັນສະຫຼຸບສັງລວມ ດັ່ງນີ້:

ຕໍ່ການປະຕິບັດແຜນການ 6 ເດືອນຕົ້ນປີ 2024

1. ການເຕີບໂຕເສດຖະກິດໃນໄລຍະ6 ເດືອນຕົ້ນປີ ສາມາດບັນລຸໄດ້ໃນລະດັບ4.7%, GDP ຄາດຄະເນ 6 ເດືອນຕົ້ນປີ ຈະບັນລຸ 148,043 ຕື້ກີບ ຫຼື ເທົ່າກັບ 50.4% ຂອງແຜນການ.

2. ການຈັດເກັບລາຍຮັບທຽບໃສ່ໄລຍະດຽວກັນຂອງປີກາຍ ເພີ່ມຂຶ້ນ 64%, ອັນພົ້ນເດັ່ນແມ່ນລັດຖະບານໄດ້ມອບຫົວໜ່ວຍວິສາຫະກິດທີ່ສູນກາງຄຸ້ມຄອງ ໃຫ້ທ້ອງຖິ່ນເປັນຜູ້ຄຸ້ມຄອງ ເຮັດໃຫ້ມີ 1 ແຂວງ ສາມາດປະຕິບັດລາຍຮັບໄດ້ເກີນ 100% ແລະ ມີ 5 ແຂວງ ສາມາດປະຕິບັດໄດ້ຫຼາຍກວ່າ 70% ຂຶ້ນໄປ, ແຕ່ເມື່ອທຽບໃສ່ກັບອັດຕາເງິນເຟີ້ແລ້ວ ລາຍຮັບຂອງເຮົາແມ່ນຍັງຫຼຸດລົງ.

3. ລັດຖະບານໄດ້ມີຄວາມພະຍາຍາມການແກ້ໄຂອັດຕາເງິນເຟີ້, ແກ້ໄຂການແລກປ່ຽນນອກລະບົບ, ຄຸ້ມຄອງເງິນຕາຕ່າງປະເທດ ໂດຍມີການຈັດຕັ້ງປະຕິບັດນະໂຍບາຍເງິນຕາທີ່ຮັດກຸມ, ຄຸ້ມຄອງອັດຕາແລກປ່ຽນບໍ່ໃຫ້ຜັນຜວນແຮງ, ລະດົມເງິນຕາຕ່າງປະເທດເຂົ້າສູ່ລະບົບທະນາຄານ ແລະ ປັບປຸງນິຕິກຳທີ່ກ່ຽວຂ້ອງ ແລະ ຊຸກຍູ້ສົ່ງເສີມນະໂຍບາຍສິນເຊື່ອຫຼາຍຂຶ້ນ; ຄຸ້ມຄອງການນຳເຂົ້າ-ສົ່ງອອກຜ່ານລະບົບທະນາຄານ, ຄັງສຳຮອງເງິນຕາຕ່າງປະເທດ ສາມາດກຸ້ມການນຳເຂົ້າໄດ້ຢູ່ 4.2 ເດືອນ.

4. ໄດ້ເອົາໃຈໃສ່ປັບປຸງການຮຽນການສອນທຸກຊັ້ນຮຽນ ຕິດພັນກັບການແກ້ໄຂບັນຫາຄູອາສາສະໝັກ, ການຂາດແຄນຄູສອນແລະການຂາດຮຽນຂອງນັກຮຽນໃນເຂດຊົນນະບົດຕາມ 5 ນະໂຍບາຍ, ປັດຈຸບັນ ໄດ້ປະຕິບັດເງິນນະໂຍບາຍສຳລັບຄູອາສາສະໝັກຄືກັບຄູທີ່ເປັນລັດຖະກອນແລ້ວ; ສືບຕໍ່ດຳເນີນການຫັນໂຮງໝໍກຸ້ມຕົນເອງຂອງ 3 ໂຮງໝໍສູນກາງ ແລະ ສືບຕໍ່ພັດທະນາຕາໜ່າງການບໍລິການສາທາລະນະສຸກໃນທົ່ວປະເທດ.

5. ໄດ້ໂຈະໂຄງການທົດລອງແລະຫັນໄປສູ່ຮູບການປົກກະຕິ, ໂຈະການພິຈາລະນາອະນຸມັດໂຄງການໃໝ່ກ່ຽວກັບໂຄງການຂຸດຄົ້ນແຮ່ທາດ ເພື່ອດຳເນີນການປະເມີນຄືນ ເຊິ່ງໂຄງການໃດທີ່ຈັດຢູ່ໃນປະເພດ C+ ແລະ C ຈະໄດ້ມີການດຳເນີນຕາມຂັ້ນຕອນທີ່ກຳນົດໄວ້ໃນກົດໝາຍ.

6. ລັດຖະບານໄດ້ສະເໜີໃຫ້ຄະນະປະຈຳສະພາແຫ່ງຊາດ ອອກມະຕິຮັບຮອງການຮັບຮູ້ສິດນຳໃຊ້ທີ່ດິນໃນເຂດທີ່ດິນປ່າ ໄມ້ຂອງປະຊາຊົນ ເພື່ອຂຶ້ນທະບຽນອອກໃບຕາດິນໃຫ້ປະຊາຊົນທີ່ອາໄສແລະທຳການຜະລິດ ຢູ່ໃນ 3 ປະເພດປ່າ ເພື່ອຮັບປະກັນການອອກໃບຕາດິນຢ່າງແຂງແຮງ.

ຕໍ່ກັບທິດທາງແຜນການ 6 ເດືອນທ້າຍປີ 2024

1. ສະພາແຫ່ງຊາດ ໄດ້ມອບໃຫ້ລັດຖະບານເພີ່ມຄວາມເອົາໃຈໃສ່ໃນການຜັນຂະຫຍາຍມະຕິຂອງກົມການເມືອງສູນກາງພັກ ສະບັບເລກທີ 04/ກມສພ, ລົງວັນທີ 11 ເມສາ 2024 ວ່າດ້ວຍການສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງໃນໄລຍະໃໝ່ເຂົ້າໃນການຈັດຕັ້ງຜະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດແລະແຜນເງິນຕາແລະສືບຕໍ່ປະຕິບັດທິດທາງ, ເປົ້າໝາຍລວມ ແລະ ແຜນວຽກຈຸດສຸມຂອງລັດຖະບານ ຕາມທີ່ໄດ້ກຳນົດໄວ້ໃນມະຕິກອງປະຊຸມສະພາແຫ່ງຊາດ ໃຫ້ບັນລຸຕາມແຜນການ.

2. ສືບຕໍ່ສຸມໃສ່ການແກ້ໄຂບັນຫາເຄັ່ງຮ້ອນດ້ານເສດຖະກິດ-ການເງິນ ໂດຍສະເພາະແກ້ໄຂບັນຫາການເໜັງຕີງຂອງອັດຕາແລກປ່ຽນ, ການເໜັງຕີງຂອງລາຄາສິນຄ້າ, ຢັບຢັ້ງສະພາບເງິນເຟີ້ບໍ່ໃຫ້ເພີ່ມຂຶ້ນສູງ ແລະ ບັນຫາໜີ້ສິນຕ່າງປະເທດດ້ວຍການບັງຄັບໃຊ້ບັນດາມາດຕະການທີ່ໄດ້ວາງອອກຢ່າງເຂັ້ມງວດ.

3. ຄົ້ນຄວ້າເພີ່ມເງິນນະໂຍບາຍ, ເງິນອຸດໜູນຄ່າຄອງຊີບ ໃຫ້ແກ່ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ແລະ ພະນັກງານບຳນານ ໄປພ້ອມກັບການປັບຄ່າແຮງງານຕ່ຳສຸດໃຫ້ໄປຕາມສະພາບເສດຖະກິດແລະຄ່າຄອງຊີບໃນປັດຈຸບັນ.

4. ປັບປຸງສະພາບແວດລ້ອມຂອງການລົງທຶນແລະການດຳເນີນທຸລະກິດຢູ່ລາວໃຫ້ໂລ່ງລ່ຽນຂຶ້ນ, ຕັດຂັ້ນຂອດທີ່ອຸດຕັນອອກໃຫ້ໄດ້, ສຸມໃສ່ແກ້ໄຂບັນຫາການສະໜອງພະລັງງານໄຟຟ້າບໍ່ພຽງພໍກັບຄວາມຕ້ອງການ, ພັດທະນາພະລັງງານລົມ, ພະລັງງານແສງອາທິດ ທີ່ສາມາດກໍ່ສ້າງໄວໂດຍສະເພາະພະລັງງານແສງອາທິດໃນເຂດອ່າງນ້ຳໜ້າເຂື່ອນໄຟຟ້າ, ເຂດທີ່ດິນປອກໂລ້ນ, ດິນຫີນແຮ່ທີ່ບໍ່ເໝາະສົມແກ່ການພັດທະນາກະສິກຳ.

5. ສືບຕໍ່ສູ້ຊົນສຸມໃສ່ການເກັບລາຍຮັບງົບປະມານປີ 2024 ໃຫ້ໄດ້ຕາມແຜນ ຫຼື ເກີນແຜນ, ສຸມໃສ່ຂະຫຍາຍຖານລາຍຮັບໃໝ່ໃຫ້ເພີ່ມຂຶ້ນ, ເກັບລາຍຮັບຈາກຖານທີ່ມີຢູ່ແລ້ວໃຫ້ຄົບຖ້ວນ, ເລັ່ງການຫັນການເກັບລາຍຮັບໃຫ້ເປັນທັນສະໄໝໃຫ້ກວ້າງ ແລະ ກວມເອົາຫຼາຍຂົງເຂດ ໂດຍສະເພາະການເກັບລາຍຮັບຢູ່ດ່ານ, ການເກັບລາຍຮັບຈາກຄ່າທຳນຽມ, ຄ່າບໍລິການ ແລະ ອື່ນໆ.

6. ສືບຕໍ່ພັດທະນາພື້ນຖານໂຄງລ່າງການກໍ່ສ້າງປັບປຸງເສັ້ນທາງໃຫ້ໄດ້ຄຸນນະພາບ, ຖືກຕ້ອງຕາມມາດຕະຖານເຕັກນິກ ແລະ ໃຫ້ສຳເລັດຕາມແຜນທີ່ກຳນົດໄວ້ ພ້ອມທັງປັບປຸງລະບົບຂົນສົ່ງຕ່າງໆໃຫ້ມີຄວາມວ່ອງໄວ, ທັນສະໄໝ ສາມາດແຂ່ງຂັນກັບພາກພື້ນ ແລະ ສາກົນ; ສືບຕໍ່ໂຄງການປ້ອງກັນຕາຝັ່ງຕາມແມ່ນ້ຳຊາຍແດນ ແລະ ຈັດສັນທຶນຮອນທີ່ເໝາະສົມໃຫ້ວຽກງານດັ່ງກ່າວ.

7. ເອົາໃຈໃສ່ຊຸກຍູ້ສົ່ງເສີມການຜະລິດໃຫ້ແຂງແຮງຂຶ້ນກວ່າເກົ່າ ພ້ອມທັງຄົ້ນຄວ້າປະເມີນຄືນບັນດາລາຍການສິນຄ້າທີ່ສາມາດຜະລິດໄດ້ເປັນຕົ້ນ ຝຸ່ນ, ອາຫານສັດ ຮັບປະກັນການສະໜອງແລະຊົມໃຊ້ຢູ່ພາຍໃນໃຫ້ພຽງພໍກັບຄວາມຕ້ອງການ ພ້ອມທັງມີກົນໄກປະສານສົມທົບລະຫວ່າງຂະແໜງກະສິກຳ ແລະປ່າໄມ້ ກັບຂະແໜງອຸດສາຫະກຳ ແລະ ການຄ້າ ຄົ້ນຄວ້າກຳນົດມາດຕະການຈຳກັດການນຳເຂົ້າສິນຄ້າທີ່ສາມາດຜະລິດໄດ້ຢູ່ພາຍໃນ ແລະ ຫຼຸດຜ່ອນການສົ່ງອອກວັດຖຸດິບບາງລາຍການທີ່ຍັງມີຄວາມຕ້ອງການຊົມໃຊ້ພາຍໃນເປັນຕົ້ນຂີ້ເບຍແລະອື່ນໆ ເພື່ອຮັບປະກັນການຊົມໃຊ້ພາຍໃນໃຫ້ພຽງພໍ.

8. ມອບໃຫ້ລັດຖະບານສຸມໃສ່ປັບປຸງສະພາບການສຶກສາ ແລະ ກໍ່ສ້າງຊັບພະຍາກອນມະນຸດ, ສືບຕໍ່ປະຕິບັດນະໂຍບາຍແລະມາດຕະການໃນການແກ້ໄຂການປະລະການຮຽນ, ບັນຫາການຂາດແຄນຄູ, ການປະຕິບັດນະໂຍບາຍອຸດໜູນຄູອາສາສະໝັກແລະແພດອາສາສະໝັກຕາມມະຕິເລກທີ 09/ລບ ໃຫ້ເປັນຮູບປະທຳຫຼາຍຂຶ້ນ ເຖິງວ່າຍັງມີຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນກໍໃຫ້ເອົາໃຈໃສ່ໃນການລົງທຶນເຂົ້າໃນຂະແໜງສຶກສາທິການ ແລະສາທາລະນະສຸກ; ຊຸກຍູ້ສົ່ງເສີມການທ່ອງທ່ຽວໃນປີທ່ອງທ່ຽວລາວຕິດພັນກັບການເປັນປະທານອາຊຽນ ແລະ ປະທານໄອປາ.

ອີງຕາມວາລະກອງປະຊຸມໃນວັນທີ 02 ກໍລະກົດທີ່ຈະມາເຖິງ, ຜູ້ແທນກອງປະຊຸມຈະໄດ້ລົງຄະແນນຮັບຮອງມະຕິກອງປະຊຸມສະພາແຫ່ງຊາດ ກ່ຽວກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ ໄລຍະ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2024.

ຕໍ່ກັບວຽກງານຂອງອົງການກວດສອບແຫ່ງລັດ

ໃນວັນທີ 14 ມິຖຸນາທີ່ຜ່ານມາ, ກອງປະຊຸມໄດ້ພິຈາລະນາບົດລາຍງານຂອງອົງການກວດສອບແຫ່ງລັດ ກ່ຽວກັບການແກ້ໄຂຜົນການກວດສອບປະຈຳປີ 2023 ສັງລວມໂດຍຫຍໍ້ຕໍ່ບັນດາທ່ານດັ່ງນີ້:

1. ກອງປະຊຸມໄດ້ຍ້ອງຍໍຊົມເຊີຍຕໍ່ອົງການກວດສອບແຫ່ງລັດ ທີ່ໄດ້ປະຕິບັດໜ້າທີ່ວຽກງານດ້ວຍຄວາມຫ້າວຫັນ; ເຖິງວ່າໄດ້ດຳເນີນການກວດສອບພຽງແຕ່ 2 ເດືອນເທົ່ານັ້ນ, ແຕ່ຍັງສາມາດລາຍງານຕໍ່ກອງປະຊຸມສະພາແຫ່ງຊາດໄດ້ທັນຕາມກຳນົດເວລາ.

2. ໄລຍະຜ່ານມາ ໄດ້ກວດສອບເຫັນລາຍຮັບ-ລາຍຈ່າຍເພີ່ມ, ໜີ້ຕ້ອງຮັບ ແລະບັນຫາອື່ນ ເປັນຈຳນວນຫຼາຍ ແຕ່ແກ້ໄຂໄດ້ໜ້ອຍ, ຊັກຊ້າ, ແກ່ຍາວ ສາເຫດຍ້ອນການຈັດຕັ້ງປະຕິບັດກົດໝາຍບໍ່ທັນເຂັ້ມງວດ, ບໍ່ເດັດຂາດ, ອົງການຄຸ້ມຄອງ ແລະ ເປົ້າໝາຍຖືກກວດສອບຍັງຖືເບົາ, ການປະສານສົມທົບລະຫວ່າງສູນກາງ ກັບ ທ້ອງຖິ່ນບໍ່ທັນກົມກຽວ, ການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຍັງບໍ່ທັນໄດ້ດີເທົ່າທີ່ຄວນ.

3. ຜົນການກວດສອບເຫັນວ່າຍັງມີລັກສະນະຊ້ຳເຮື້ອ ໂດຍສະເພາະການລະເມີດກົດໝາຍ, ວິໄນແຜນການ-ການເງິນ ມີມູນຄ່າສູງ, ເຮັດໃຫ້ສັງຄົມຂາດຄວາມເຊື່ອໝັ້ນຕໍ່ການບໍລິຫານລັດ; ກອງປະຊຸມໄດ້ສະເໜີໃຫ້ອົງການຄຸ້ມຄອງເປົ້າໝາຍ ແລະ ເປົ້າໝາຍຖືກກວດສອບຮ່ວມກັນວິເຄາະ-ວິໄຈບັນຫາທີ່ສະສົມເປັນອັນລະອຽດ ອັນໃດສາມາດເກັບກູ້ຄືນໄດ້ ແລະ ບໍ່ສາມາດເກັບກູ້ຄືນໄດ້ ຫຼືມີຕົວຕົນ ແລະ ບໍ່ມີຕົວຕົນ ເພື່ອລາຍງານສະພາແຫ່ງຊາດພິຈາລະນາແກ້ໄຂ.

4. ກອງປະຊຸມເນັ້ນໜັກໃຫ້ຄະນະພັກ, ຄະນະນຳຂອງອົງການຄຸ້ມຄອງເປົ້າໝາຍ ແລະ ເປົ້າໝາຍທີ່ຖືກກວດສອບເປັນເຈົ້າການຊີ້ນຳ-ນຳພາແກ້ໄຂຜົນການກວດສອບຢ່າງເດັດຂາດ, ຖືເອົາການແກ້ໄຂການກວດສອບເປັນເງື່ອນໄຂໃນການປະເມີນການແຂ່ງຂັນຮັກຊາດ ແລະພັດທະນາ, ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນ.

5. ກອງປະຊຸມຊົມເຊີຍກະຊວງການເງິນ ທີ່ໄດ້ເອົາໃຈໃສ່ແກ້ໄຂຜົນການກວດສອບໃນ 6 ເດືອນຕົ້ນປີຢ່າງຕັ້ງໜ້າ, ພ້ອມທັງສະເໜີໃຫ້ສືບຕໍ່ເສີມຂະຫຍາຍແກ້ໄຂຜົນການກວດສອບໃນ 6 ເດືອນທ້າຍປີ ໃຫ້ໄດ້ຫຼາຍຂຶ້ນກວ່າເກົ່າ ເພື່ອເປັນແບບຢ່າງທີ່ດີໃຫ້ຫົວໜ່ວຍງົບປະມານອື່ນ.

6. ກອງປະຊຸມສະເໜີໃຫ້ມີມາດຕະການຢ່າງເດັດຂາດ ແລະ ເຂັ້ມງວດ ຕໍ່ອົງການຄຸ້ມຄອງແລະເປົ້າໝາຍທີ່ຖືກກວດສອບ ທີ່ບໍ່ໃຫ້ການຮ່ວມມື, ບໍ່ສະໜອງຂໍ້ມູນແລະບໍ່ເຂົ້າຮ່ວມວຽກງານກວດສອບແຫ່ງລັດ.

ນອກຈາກການລາຍງານຂອງອົງການກວດສອບແຫ່ງລັດແລ້ວ, ກອງປະຊຸມຍັງໄດ້ຮັບຟັງການຊີ້ແຈງ ແລະ ໃຫ້ຄວາມກະຈ່າງແຈ້ງຈາກກະຊວງແຜນການແລະການລົງທຶນ, ກະຊວງການເງິນ ແລະ ທະນາຄານ ແຫ່ງ ສປປ ລາວ

# ບາງຄຳເຫັນຂອງ ສສຊ ຕໍ່ບົດລາຍງານຂອງລັດຖະບານ

ບັນດາທ່ານສະມາຊິກສະພາແຫ່ງຊາດ (ສສຊ) ໄດ້ສຸມໃສ່ຄົ້ນຄວ້າ ແລະ ປະກອບຄຳເຫັນໃສ່ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ ຕິດພັນກັບການຈັດຕັ້ງປະຕິບັດສອງວາລະແຫ່ງຊາດໄລຍະ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ2024 ໃນວາລະດຳເນີນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດຊຸດທີ IX ເຊິ່ງມີບາງຄຳເຫັນຂອງ ສສຊ ຈຳນວນໜຶ່ງດັ່ງນີ້:



**ທ່ານບຸນຕາເທບພະວົງ ສສຊ ປະຈຳເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ** ໄດ້ປະກອບຄຳເຫັນຕໍ່ບົດລາຍງານຂອງລັດຖະບານເຊິ່ງມີບາງຕອນວ່າ: ຮີບຮ້ອນຜັນຂະຫຍາຍມະຕິຂອງກົມການເມືອງສູນກາງພັກວ່າດ້ວຍການສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງໃນໄລຍະໃໝ່ ສະບັບເລກທີ 04/ກມສພ, ລົງວັນທີ 11 ເມສາ 2024 ອອກເປັນແຜນວຽກແຜນງານລະອຽດ ເພື່ອໃຫ້ປະຊາຊົນລາວບັນດາເຜົ່າ, ພາກທຸລະກິດ ກໍໄດ້ແລະພ້ອມກັນຜັນຂະຫຍາຍ ແລະ ເຮັດໄປລວງດຽວກັນ, ສັງຄົມກໍຈະໄດ້ຊ່ວຍລັດຖະບານໃນການພັດທະນາເສດຖະກິດໄປຄຽງຄູ່ກັນ.

ກ່ຽວກັບແຮ່ທາດຄວນແບ່ງຄວາມຮັບຜິດຊອບໃຫ້ທ້ອງຖິ່ນຄຸ້ມຄອງຢ່າງເດັດຂາດ, ທາງສູນກາງ ກໍຄືລັດຖະບານ ມີພຽງແຕ່ກວດກາ ແລະ ຊ່ວຍທາງດ້ານວິຊາການ.

ວຽກງານການສຶກສາແມ່ນສຳຄັນທີ່ສຸດເພາະການພັດທະນາຊັບພະຍາກອນມະນຸດ, ການສ້າງຄົນເປັນບັນຫາກົກຂອງປະເທດຊາດ. ການສ້າງເດັກນ້ອຍໃນມື້ນີ້ໃຫ້ເປັນຄົນດີຄົນເກັ່ງ ຈະຊ່ວຍໃຫ້ຊາວໜຸ່ມເປັນຄົນດີຄົນເກັ່ງໃນມື້ໜ້າ, ສ້າງຊາວໜຸ່ມເປັນຄົນດີຄົນເກັ່ງ ເຮົາກໍຈະໄດ້ພະນັກງານທີ່ເປັນຄົນດີຄົນເກັ່ງໃນມື້ໜ້າ, ພະນັກງານເປັນຄົນດີຄົນເກັ່ງ ເຮົາກໍຈະໄດ້ຄະນະພັກ, ຄະນະນຳແຕ່ລະຂັ້ນ ທີ່ເປັນຄົນດີຄົນເກັ່ງ. ມອບຂາດຕົວໃຫ້ທ້ອງຖິ່ນປະຕິຮູບການສຶກສາຕາມສີສັນຂອງທ້ອງຖິ່ນນັ້ນໆ, ກະຊວງຄຸ້ມຄອງດ້ານວິຊາການ ແລະ ຕ້ອງຊ່ວຍດ້ານໃດດ້ານໜຶ່ງ; ແຕ່ວ່າສີສັນຂອງແຕ່ລະແຂວງມັນຈະບໍ່ຄືກັນ, ຕ້ອງມີການສ້າງຫຼັກສູດໃດໜຶ່ງທີ່ເໝາະສົມສຳລັບແຂວງນັ້ນໆ ແລະ ອີກຢ່າງໜຶ່ງ ປະຕິຮູບລະບົບການສຶກສາໃຫ້ສັ້ນລົງ, ປັດຈຸບັນນີ້ ແມ່ນຮອດ ມ7ເຫັນວ່າຮຽນຫຼາຍໂພດບາງເທື່ອກໍໃຫ້ສັ້ນລົງຮອດແຕ່ ມ6 ຫຼື ມ5 ກໍໄດ້ ບາງປະເທດເຂົາເຈົ້າກໍຮຽນແຕ່ໜ້ອຍດຽວ, ແຕ່ຫຼັກສູດຕ້ອງເພີ່ມວິຊາຊີບເຂົ້າຕື່ມ.

ດ້ານແຮງງານ ກໍຄືເຮົາຮູ້ນຳກັນ ມີໄລຍະໜຶ່ງ 100 ໂດລາ/9 ແສນກີບ ແຕ່ດຽວນີ້ 2 ລ້ານກວ່າກີບ, ຄ່າແຮງງານຂັ້ນຕ່ຳ 1.6 ລ້ານກີບ ຈະຢູ່ປະມານ 178 ໂດລາ ໃນຕອນນັ້ນ, ແຕ່ດຽວນີ້ 178 ໂດລາ ຈະຢູ່ປະມານ 3.9 ລ້ານກີບ; ເຫັນບັນຫາເງິນຂຶ້ນ ແຕ່ວ່າຄ່າແຮງງານຍັງຕ່ຳ, ດັ່ງນັ້ນຄວນຍົກຄ່າແຮງງານຂັ້ນຕ່ຳຂຶ້ນ ໃຫ້ເປັນ 2.8 ລ້ານກີບ ຈຶ່ງຈະພໍຢູ່ລອດ.

**ທ່ານ ປອ. ວົງເພັດ ອຸດົມລິດ ສສຊ ປະຈຳເຂດເລືອກຕັ້ງທີ 6 ແຂວງຫຼວງພະບາງ** ມີຄຳເຫັນແລກ ປ່ຽນໃນ 3 ແຜນງານໃຫຍ່ຂອງກະຊວງສຶກສາທິການ ແລະ ກິລາ ວາງອອກ, ທ່ານໄດ້ກ່າວວ່າ:



1. ແຜນງານການເຂົ້າເຖິງ ແລະ ຄວາມເທົ່າທຽມກັນຂອງການສຶກສາ

2. ແຜນງານຄຸນນະພາບ ແລະ ຜົນການຮຽນຂອງການສຶກສາ

3. ແຜນງານລະບົບບໍລິຫານ ແລະ ຄຸ້ມຄອງການສຶກສາ

ສະພາບ ແລະ ບັນຫາ 3 ແຜນງານໃຫຍ່ຂອງຂະແໜງການສຶກສາ ອີງຕາມຜົນການປະເມີນກາງສະໄໝຂອງວຽກງານການສຶກສາ ເຫັນວ່າການເຂົ້າຮຽນ ແລະ ອັດຕາປະລະການຮຽນທຸກຊັ້ນທຸກສາຍ ນັບແຕ່ອະນຸບານໄປເຖິງລະດັບມະຫາວິທະຍາໄລ ເຫັນວ່າຍັງສືບຕໍ່ຫຼຸດລົງ ໂດຍສະເພາະໃນກຸ່ມຜູ້ດ້ອຍໂອກາດ, ຜົນການຮຽນຍັງຕ່ຳ, ການສະໜອງການສຶກສາສາຍອາຊີວະສຶກສາ ແລະ ເຝິກອົບຮົມວິຊາຊີບ ຍັງມີຫຼາຍດ້ານຍັງບໍ່ທັນສອດຄ່ອງກັບຄວາມຕ້ອງການຂອງຕະຫຼາດແຮງງານເທົ່າທີ່ຄວນ; ການຈັດສັນງົບປະມານໃຫ້ແກ່ຂະແໜງການສຶກສາປີນີ້ໄດ້ພຽງແຕ່ປະມານ 8% (ພາຍຫຼັງ ໂຄວິດ-19 ອາຊຽນເພີ່ນໄດ້ເພີ່ມງົບປະມານໃສ່ວຽກງານການສຶກສາຫຼາຍຂຶ້ນ, ກົງກັນຂ້າມ ປະເທດເຮົາຊ້ຳພັດຫຼຸດລົງ) ການຂາດແຄນຄູນັບມື້ນັບເພີ່ມຂຶ້ນເຖິງແມ່ນວ່າກະຊວງສຶກສາທິການ ແລະ ກິລາ ໄດ້ສຸມໃສ່ປະຕິບັດຄຳສັ່ງເລກທີ 09 ແລ້ວກໍຕາມ. ທ່ານໄດ້ກ່າວຕື່ມວ່າ: ສາເຫດທີ່ພາໃຫ້ເກີດສະພາບ ແລະ ບັນຫາທັງ 3 ແຜນງານແມ່ນຍ້ອນ:

1. ຄວາມຫຍຸ້ງຍາກທາງດ້ານເສດຖະກິດ ແລະ ຂໍ້ຈຳກັດດ້ານການເງິນຂອງຄອບຄົວເປັນປັດໄຈຕົ້ນຕໍ, ຜູ້ປົກຄອງ ແລະ ນັກຮຽນ ຈຳນວນຫຼາຍເຫັນຄຸນຄ່າຂອງການສຶກສາ, ແຕ່ຢູ່ທ້ອງຖິ່ນ ຈະໃຫ້ໄປເຂົ້າຮຽນໄດ້ແນວໃດ?

2. ສາເຫດບໍ່ໄດ້ຄຸນນະພາບ ອັນໜຶ່ງມາຈາກການສະໜັບສະໜູນການຮຽນພາສາລາວໃຫ້ແກ່ເດັກຊົນເຜົ່າຍັງບໍ່ທັນສອດຄ່ອງເທົ່າທີ່ຄວນ ເພາະວ່າເຂົາເຈົ້າເກີດມາໄດ້ຮຽນ 2 ພາສາໄປພ້ອມກັນ ແລະ ການຂະຫຍາຍການສຶກສາເດັກກ່ອນໄວຮຽນ ໄປສູ່ເຂດຫ່າງໄກສອກຫຼີກຍັງຈຳກັດ;

3. ຂີດຄວາມສາມາດຄູຍັງຕ່ຳ ເປັນປັດໄຈທີ່ກະທົບອັນໃຫຍ່ຫຼວງຕໍ່ຜົນການຮຽນຂອງນັກຮຽນ ຍ້ອນວ່າງົບ ປະມານສຳລັບການພັດທະນາຄູຍັງມີຈຳກັດ ແລະ ການສະໜອງຄູຍັງບໍ່ພຽງພໍ ເຊິ່ງສະແດງອອກຫ້ອງຄວບເພີ່ມຂຶ້ນຫຼາຍ;

4. ສຳລັບດ້ານວຽກງານອາຊີວະສຶກສາ ການຮ່ວມມືກັບພາກອຸດສາຫະກຳປະກອບການຍັງມີຈຳກັດ;

5. ກະຊວງສຶກສາທິການ ແລະ ກິລາ ຍັງຂາດງົບປະມານເພື່ອໄປພັດທະນາຂີດຄວາມສາມາດຂອງຜູ້ບໍລິຫານ ແລະວຽກງານສັບຊ້ອນຄູທີ່ເຫຼືອ ໄປສອນບ່ອນທີ່ຄູຍັງບໍ່ພຽງພໍ;

6. ອົງການປົກຄອງທ້ອງຖິ່ນຈຳນວນໜຶ່ງ ຍັງຖືວ່າວຽກງານພັດທະນາການສຶກສາແມ່ນໜ້າທີ່ຂອງຂະແໜງການສຶກສາຝ່າຍດຽວ.

ທ່ານໄດ້ສະເໜີວິທີການແກ້ໄຂໄປຍັງລັດຖະບານຕື່ມວ່າ:

1. ແຜນການເຂົ້າເຖິງ ແລະ ຄວາມເທົ່າທຽມກັນ: ສະເໜີກະຊວງສຶກສາທິການ ແລະ ກິລາ ວິເຄາະເພີ່ມຕື່ມຕໍ່ກັບສາເຫດທີ່ເພີ່ມຂຶ້ນຕໍ່ວຽກງານການສຶກສາແຕ່ລະຊັ້ນລະສາຍ ສ້າງໂອກາດການມີວຽກເຮັດງານທຳທີ່ດີ ແລະ ສະພາບແວດລ້ອມທີ່ດີໃນໂຮງຮຽນ, ການໂຄສະນາເຜີຍແຜ່ ແລະ ສົ່ງເສີມການມີສ່ວນຮ່ວມຂອງພໍ່ແມ່ຜູ້ປົກຄອງ ແລະອຳນາດການປົກຄອງທ້ອງຖິ່ນ ໃຫ້ຫຼາຍຂຶ້ນເປັນສິ່ງຈຳເປັນ, ລັດຖະບານຄວນຂະຫຍາຍການສະໜອງເບ້ຍລ້ຽງໃຫ້ແກ່ນັກຮຽນທີ່ດ້ອຍໂອກາດ ລວມໄປເຖິງເດັກນ້ອຍທີ່ມາຈາກຄອບຄົວທຸກຍາກ;

2. ວິທີການແກ້ໄຂແຜນງານຄຸນນະພາບ ແລະ ຮຽນຮູ້ ສະເໜີໃຫ້ກະຊວງສຶກສາທິການ ແລະ ກິລາ ສຸມໃສ່ເສີມທັກສະດ້ານພາສາລາວ ແລະຄະນິດສາດ ພ້ອມທັງດຳເນີນການປະເມີນຜົນການຮຽນຂອງນັກຮຽນແບບຕໍ່ເນື່ອງ ລວມທັງອອກແບບລະບົບການຕິດຕາມກວດກາໃຫ້ສອດຄ່ອງ, ການເຝິກອົບຮົມຄູປະຈຳການ ແລະການພັດທະນາຊີວິດຄູ ເຫັນວ່າມີຄວາມຈຳເປັນຫຼາຍ ພ້ອມທັງພັດທະນາຂີດຄວາມສາມາດຂອງຜູ້ບໍລິຫານການສຶກສາ ໃຫ້ສົມຄູ່ກັບວຽກງານການສຶກສາໃນໄລຍະໃໝ່, ການກຳນົດຍຸດທະສາດໃນການສ້າງຄູ, ສະໜອງຄູໃຫ້ພຽງພໍເປັນສິ່ງສຳຄັນທີ່ສຸດ;

3. ວິທີການແກ້ໄຂການບໍລິຫານ ແລະ ການຄຸ້ມຄອງ: ກະຊວງສຶກສາທິການ ແລະ ກິລາຄວນທົບທວນຄືນກ່ຽວກັບການຈັດຕັ້ງປະຕິບັດມະຕິເລກທີ 09 (ເພື່ອຄວາມຍືນຍົງ ຄູອາສາຈະກາຍເປັນຄູປະຈຳການ ຫຼືວ່າເປັນພາລະກອນຄູ) ເຮັດແນວໃດຈະເສີມພາລະບົດບາດຂອງຄະນະກຳມະການສຶກສາຂັ້ນບ້ານຄືນໃໝ່ ໃຫ້ການ ຈັດຕັ້ງທ້ອງຖິ່ນເຂົ້າມາມີສ່ວນຮ່ວມຫຼາຍຂຶ້ນ; ສະເໜີປັບປຸງກົດໝາຍ, ນິຕິກຳໃຕ້ກົດໝາຍ ໃຫ້ສອດຄ່ອງກັບສະພາບການສຶກສາໃນໄລຍະໃໝ່ ໂດຍໃຫ້ມີການຈັດລຽງບຸລິມະສິດການລົງທຶນເຂົ້າໃນວຽກງານການສຶກສາຄືນໃໝ່ ຂໍໃຫ້ໄດ້ 8% ຕາມກົດໝາຍລະບຸໄວ້.



**ທ່ານ ນາງ ສວຍເພັດ ທອງສົມບັດ ສສຊ ປະຈຳເຂດເລືອກຕັ້ງທີ 8 ແຂວງຫົວພັນ** ໄດ້ປະກອບຄຳເຫັນຕໍ່ບົດລາຍງານຂອງລັດຖະບານກ່ຽວກັບການຈັດຕັ້ງປະຕິບັດບັນດາຄາດໝາຍພັດທະນາຊົນນະບົດແລະແກ້ໄຂຄວາມທຸກຍາກ ເປັນຕົ້ນການສ້າງຄອບຄົວພົ້ນທຸກ, ບ້ານພົ້ນທຸກ, ຄອບຄົວພັດທະນາ ແລະ ອື່ນໆ ເຊິ່ງປີ 2023 ມີຄອບຄົວພົ້ນທຸກກວມເອົາ 83.83% ບ້ານພົ້ນທຸກກວມເອົາ 69.69% ແລະ ເມືອງພົ້ນທຸກກວມເອົາ 48% ຖືວ່າເປັນຕົວເລກທີ່ດີ, ແຕ່ເຖິງຢ່າງໃດກໍຕາມນັ້ນແມ່ນຕົວເລກສະເລ່ຍ; ເມື່ອເບິ່ງຕົວຈິງເຫັນວ່າຍັງມີບາງແຂວງຕົວເລກຄວາມທຸກຍາກຍັງສູງ ໂດຍສະເພາະແມ່ນແຂວງຫົວພັນ ເຊິ່ງປັດຈຸບັນນີ້ ອັດຕາສ່ວນຄອບຄົວທຸກຍາກຍັງກວມເອົາ 44.39% ບ້ານທຸກຍາກກວມເອົາ 67.82% ແລະ ໃນນີ້ ບ້ານທີ່ຍັງບໍ່ມີໄຟຟ້ານຳໃຊ້ມີຮອດ 44 ບ້ານ ກວມເອົາ 6.08% ການນຳໃຊ້ໂທລະສັບ, ອິນເຕີເນັດບາງບ້ານຍັງມີຄວາມຫຍຸ້ງຍາກ, ເມືອງທຸກຍາກກວມເອົາຮ້ອຍສ່ວນຮ້ອຍ ໝາຍຄວາມວ່າ 10 ເມືອງໃນແຂວງຫົວພັນຍັງເປັນເມືອງທຸກຍາກ.

ມະຕິກອງປະຊຸມສະພາແຫ່ງຊາດຊຸດທີ VIII ໄດ້ຮັບຮອງວ່າສ້າງເມືອງຊ່ອນ ແຂວງຫົວພັນ ແລະ ເມືອງນອງ ແຂວງສະຫວັນນະເຂດ ໃຫ້ເປັນເມືອງພົ້ນທຸກ; ແຕ່ມາຮອດປັດຈຸບັນເມືອງຊ່ອນຍັງບໍ່ທັນໄດ້ພົ້ນທຸກ ເຊິ່ງຜ່ານມາລັດຖະບານກໍຄືທ້ອງຖິ່ນ ໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດຄາດໝາຍພັດທະນາຊົນນະບົດແລະແກ້ໄຂຄວາມທຸກຍາກ, ແຕ່ກໍຍັງມີຂໍ້ຫຍຸ້ງຍາກຫຼາຍບັນຫາ ເຊິ່ງຈຸດສຸມບຸລິມະສິດຂອງສູນກາງ ແລະ ທ້ອງຖິ່ນ ໄດ້ກຳນົດຢ່າງຈະແຈ້ງແລ້ວ ແຕ່ການຈັດຕັ້ງປະຕິບັດຕົວຈິງ ການພັດທະນາຍັງບໍ່ເປັນໄປຕາມຈຸດສຸມທີ່ໄດ້ກຳນົດໄວ້ ເປັນຕົ້ນການສຸມທຶນຮອນເຂົ້າໃສ່ວຽກງານດັ່ງກ່າວ ອາດເປັນຍ້ອນວ່າມີທຶນຮອນໜ້ອຍ ເຮັດໃຫ້ການແບ່ງປັນມີຄວາມຫຍຸ້ງຍາກ, ການຈັດຕັ້ງຂັ້ນຮາກຖານບາງບ້ານຍັງບໍ່ທັນເຂັ້ມແຂງ, ກົນໄກການປະສານງານຂັ້ນຕ່າງໆ ບາງຄັ້ງບໍ່ທັນໂລ່ງລ່ຽນ ໂດຍສະເພາະແມ່ນເຂດຫ່າງໄກສອກຫຼີກ. ຜ່ານການຕິດຕາມກວດກາ ແລະ ພົບບັນຫາຕົວຈິງຄືແນວນັ້ນຈຶ່ງຂໍສະເໜີວ່າ:

1. ຈັດສັນງົບປະມານໃສ່ວຽກງານພັດທະນາຊົນນະບົດແລະແກ້ໄຂຄວາມທຸກຍາກໃຫ້ຫຼາຍຂຶ້ນຕື່ມ ຖ້າຫາກວ່າແຍກເປັນບ້ວງສະເພາະໄດ້ກໍຍິ່ງເປັນການດີ ແລະ ໃຫ້ເບິ່ງຄືນແຂວງທີ່ທຸກຍາກຫຼາຍຄືແຂວງຫົວພັນ, ຂໍໃຫ້ເບິ່ງຕາມສະພາບຄວາມເປັນຈິງ ບໍ່ຢາກໃຫ້ຈັດສັນເປັນເອກະພາບກັນ ເພາະຜ່ານມາແຂວງຫົວພັນກໍໄດ້ຮັບທຶນແຕ່ວ່າໜ້ອຍ ຖ້າທຽບໃສ່ຄວາມທຸກຍາກ ເພາະອັດຕາສ່ວນກວມສູງ ແລະ ຜ່ານມາການອະນຸມັດທຶນຂ້ອນຂ້າງວ່າຊັກຊ້າ ເຮັດໃຫ້ການຈັດຕັ້ງປະຕິບັດຂອງບັນດາໂຄງການບໍ່ໄປຕາມກຳນົດເວລາ;

2. ທຶນພັດທະນາເມືອງຊ່ອນ ຜ່ານມາລັດຖະບານກໍຈັດສັນໃຫ້ແຕ່ວ່າໄດ້ໜ້ອຍ, ໄດ້ມາແລ້ວສ່ວນຫຼາຍໄປຊຳລະໜີ້ເກົ່າ ອັນທີ່ຈະມາພັດທະນາໃໝ່ແມ່ນເຫຼືອໜ້ອຍ ຈຶ່ງຂໍໃຫ້ລັດຖະບານຊ່ວຍຕື່ມວ່າຈະເຮັດແນວໃດເພື່ອໃຫ້ເມືອງຊ່ອນຫຼຸດພົ້ນອອກຈາກເມືອງທຸກຍາກໄດ້ຕາມມະຕິຂອງສະພາແຫ່ງຊາດ;

3. ການພັດທະນາແຕ່ລະຈຸດສຸມ ຄວນທັນເອົາພະນັກ

ອ່ານຕໍ່ໜ້າ 6

## ບາງຄຳເຫັນ...

(ຕໍ່ຈາກໜ້າ 5)

ງານລົງຊ່ວຍຮາກຖານທ້ອງຖິ່ນຕື່ມ ແລະຜູ້ຈະລົງໄປນັ້ນ ກໍຕ້ອງຄົບມາດຕະຖານເງື່ອນໄຂ, ພ້ອມນີ້ ກໍຕ້ອງໄດ້ປັບປຸງກົນໄກການປະສານງານແຕ່ລະຂັ້ນແຕ່ລະຂະແໜງການໃຫ້ໄປໃນລວງດຽວກັນ.

**ທ່ານ ປອ. ຄຳແສນ ສີສະວົງ ສສຊ ປະຈຳເຂດເລືອກຕັ້ງທີ 9 ແຂວງຊຽງຂວາງ** ໄດ້ປະກອບຄຳເຫັນຕໍ່ທິດທາງແຜນວຽກຈຸດສຸມ ໄລຍະ 6 ເດືອນທ້າຍປີ 2024 ໂດຍມີບາງຕອນທ່ານສະເໜີວ່າ: ຢາກໃຫ້ເພີ່ມການເກັບພາສີສິນຄ້າຟຸ່ມເຟືອຍທີ່ນຳເຂົ້າ ແລະ ເກັບເປັນເງິນຕາ ເພາະລັດຖະບານຕ້ອງການເງິນຕາ; ຄິດໄລ່ເປັນເງິນໂດລາຢູ່, ແຕ່ເວລາຈ່າຍພັດຈ່າຍເປັນເງິນກີບ ເປັນຊ່ອງວ່າງໃຫ້ຜູ້ປະກອບການນຳເງິນໂດລາໄປແລກປ່ຽນເອົາເງິນກີບຢູ່ນອກລະບົບແລ້ວເອົາມາຈ່າຍ, ເປັນຫຍັງພາສີອາກອນບໍ່ຮັບເອົາເງິນໂດລາເລີຍເພື່ອເຮັດໃຫ້ລັດເຮົາມີເງິນໂດລາ ຫຼື ເງິນຕາຢູ່ໃນທະນາຄານ. ຄວນຊຸກຍູ້ສົ່ງເສີມການຫຼູດພາສີອາກອນມູນຄ່າເພີ່ມໃຫ້ແກ່ສິນຄ້າຜະລິດຢູ່ພາຍໃນປະເທດ ແລະ ເພີ່ມສຳລັບສິນຄ້າຟຸ່ມເຟືອຍ ຫຼື ນຳເຂົ້າ ຈາກ 10% ເປັນ 25% ໂລດ ຫຼາຍປະເທດກໍເກັບສູງ ເພາະຈະເປັນການອຸດຕັນເງິນຕາໄຫຼອອກ ແລະ ເປັນການຈູງໃຈມາຊົມໃຊ້ຜະລິດຕະພັນພາຍໃນ.



ເພື່ອໃຫ້ສັງຄົມນຳເງິນຕາໄປຝາກຢູ່ທະນາຄານ ຄວນເພີ່ມອັດຕາດອກເບ້ຍ ເພາະອັດຕາດອກເບ້ຍເງິນຕາຍັງຕ່ຳຫຼາຍ ຕົວຢ່າງ 4% ຕໍ່ປີ, ຜູ້ທີ່ມີເງິນຕາຢາກສະສົມເງິນ ຖ້າໄປຝາກກໍໄດ້ 4% ແຕ່ໄປຊື້ຄຳເກັບໄວ້ພັດໄດ້ 10% ຕົວຢ່າງໃນຕົ້ນປີ 2023 ຄຳ 1 ບາດ=1,000 ໂດລາ, ປັດຈຸບັນຂາຍໄດ້ 1,200 ໂດລາ ມີກຳໄລ 200 ໂດລາ; ແຕ່ໄປຝາກທະນາຄານ 1,000 ໂດລາ ໄດ້ພຽງ 40 ໂດລາ. ຜູ້ບໍລິໂພກທາງນອກ, ຜູ້ມີເງິນຕາເຂົາເຈົ້າບໍ່ເອົາເງິນຝາກທະນາຄານ, ເຂົາເອົາເງິນໄປຊື້ຄຳແທ່ງ, ຄຳຮູບປະພັນອື່ນໆ ສະສົມ ຫຼື ເຮັດກິດຈະກຳອື່ນ.

ສະເໜີລັດຖະບານສືບຕໍ່ສົ່ງເສີມທົ່ວສັງຄົມໃຫ້ມີສ່ວນຮ່ວມໃນການພັດທະນາການສຶກສາ ແລະ ສາທາລະນະສຸກ ເພາະເປັນວຽກງານສຳຄັນທີ່ສຸດ; ຜ່ານມາເຮົາວ່າເອົາການສຶກສາໄປກ່ອນບາດກ້າວໜຶ່ງ ແຕ່ຢາກໃຫ້ເອົາການສຶກສາໄປກ່ອນສາມບາດກ້າວໄດ້ບໍ່? ເພາະເຮົາໄປເບິ່ງທ່າແຮງຂອງປະຊາຊົນທີ່ສົ່ງລູກຫຼານໄປຮຽນຕ່າງປະເທດ ເຫັນວ່າ ຍັງມີຫຼາຍ ແລະ ເປັນຫຍັງເຂົາຈຶ່ງສົ່ງໄປ ເພາະການສະໜອງພາຍໃນເຮົາບໍ່ມີ, ເຂົາກໍເລີຍສົ່ງອອກໄປຕ່າງປະເທດ.

**ທ່ານ ພອ. ປອ. ພູທອນ ວໍລະພັດ ສສຊ ປະຈຳເຂດເລືອກຕັ້ງທີ 10 ແຂວງວຽງຈັນ** ໄດ້ມີບາງຄຳເຫັນເພື່ອແລກປ່ຽນຕໍ່ທິດທາງແຜນວຽກຈຸດສຸມ 6 ເດືອນທ້າຍປີ 2024 ວ່າ: ລັດຖະບານ ຄວນກຳນົດການອອກໃບຕາດິນຕື່ມໃສ່ວຽກຈຸດສຸມດ້ານເສດຖະກິດ ເພາະເປັນຄາດໝາຍໜຶ່ງທີ່ຍັງບໍ່ທັນບັນລຸໄດ້ຕາມມະຕິສະພາແຫ່ງຊາດ ສະບັບເລກທີ 118/ສພຊ, ລົງວັນທີ 21 ພະຈິກ 2023 ວາງອອກວ່າ ປີ 2024 ອອກໃບຕາດິນໃຫ້ໄດ້ 300,000 ຕອນ ແຕ່ການຈັດຕັ້ງປະຕິບັດຕົວຈິງໄດ້ພຽງ 36,409 ຕອນ ເທົ່າກັບ 12% ຂອງແຜນການ, ເຊິ່ງເປົ້າໝາຍການອອກໃບຕາດິນ ຖ້າວ່າຈັດຕັ້ງປະຕິບັດໄດ້ຕາມແຜນຈະເປັນການຂະຫຍາຍຖານລາຍຮັບທີ່ສຳຄັນ ແລະເປັນຖານເກັບລາຍຮັບເຂົ້າງົບປະມານແຫ່ງລັດທີ່ແນ່ນອນ.



ທະນາຄານແຫ່ງ ສປປ ລາວ ຄວນວິເຄາະວິໄຈທ່າອຽງອັດຕາເງິນເຟີ້ໃຫ້ຊັດເຈນຕື່ມ ເພື່ອກຳນົດຕົວເລກໃຫ້ແທດເໝາະກັບຕົວຈິງ ແລະ ສາມາດຈັດຕັ້ງປະຕິບັດໄດ້, ຖ້າກຳນົດອັດຕາເງິນເຟີ້ເປັນຕົວເລກດຽວຄື 9% ເຫັນວ່າຈະບໍ່ສາມາດປະຕິບັດໄດ້ ແລະ ການກຳນົດຕົວເລກດັ່ງກ່າວ ກໍບໍ່ພາວະວິໄສປານໃດ ເພາະເຫັນວ່າເງິນກີບຍັງມີທ່າອຽງສືບຕໍ່ອ່ອນຄ່າ; ຄວບຄຸມປະລິມານເງິນ M2 ບໍ່ໃຫ້ຂະຫຍາຍໃນອັດຕາສູງຂຶ້ນຫຼາຍ ເພາະຈະເປັນສາ ເຫດໜຶ່ງທີ່ເຮັດໃຫ້ເງິນກີບອ່ອນຄ່າ.

ທະນາຄານແຫ່ງ ສປປ ລາວ ຕ້ອງເປັນເຈົ້າການສືບຕໍ່ປະສານສົມທົບກັບກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງຊັບພະຍາກອນທຳມະຊາດແລະສິ່ງແວດລ້ອມ ແລະ ພາກສ່ວນທີ່ກ່ຽວຂ້ອງເອົາໃຈໃສ່ຕິດຕາມກວດກາ ແລະ ແກ້ໄຂບັນຫາການນຳໃຊ້ເງິນຕາເຂົ້າໃນການຊຳລະ ແລະ ຮັບຊຳລະ ລວມທັງການຊື້-ຂາຍຍານພາຫະນະ, ສິດນຳໃຊ້ທີ່ດິນ ແລະ ສິ່ງປຸກສ້າງຢູ່ ສປປ ລາວ ໃຫ້ມີການຫັນປ່ຽນຢ່າງແຂງແຮງ ແລະ ຂາດຕົວ. ບັນຫາດັ່ງກ່າວນີ້ ໄດ້ມີຄຳສັ່ງຂອງທ່ານນາຍົກລັດຖະມົນຕີ ສະບັບເລກທີ 10/ນຍ, ລົງວັນທີ 14 ກໍລະກົດ 2023 ວ່າດ້ວຍການຈັດຕັ້ງປະຕິບັດການຄຸ້ມຄອງເງິນຕາຕ່າງປະເທດ ກຳນົດຢ່າງຈະແຈ້ງແລ້ວ; ພ້ອມກັນນັ້ນ, ກະຊວງທີ່ກ່ຽວຂ້ອງກໍໄດ້ຜັນຂະຫຍາຍເປັນນິຕິກຳອັນລະອຽດແລ້ວ, ແຕ່ການຈັດຕັ້ງປະຕິບັດເຫັນວ່າການຕິດຕາມກວດກາຍັງບໍ່ທັນເຂັ້ມງວດ ແລະ ເດັດຂາດເທົ່າທີ່ຄວນ.

**ທ່ານ ສຈ. ປອ. ທົງຄຳ ສຸວັນນະວົງ ສສຊ ປະຈຳເຂດເລືອກຕັ້ງທີ 10 ແຂວງວຽງຈັນ** ໄດ້ປະກອບຄຳເຫັນຕໍ່ການປະຕິຮູບການສຶກສາ ເຊິ່ງມີບາງຕອນທ່ານໄດ້ກ່າວວ່າ: ການພັດທະນາປະເທດຊາດຈະປະສົບຜົນສຳເລັດ, ປັດໄຈສຳຄັນກໍຄືຊັບພະຍາກອນຕ້ອງໄດ້ຮັບການພັດທະນາ ທັງຊັບພະຍາກອນມະນຸດ ແລະຊັບພະຍາ ກອນທຳມະຊາດ; ການສຶກສາເປັນເຄື່ອງມືທີ່ສຳຄັນໃນການເສີມສ້າງຊັບພະຍາກອນມະນຸດໃຫ້ມີຄຸນນະພາບເພື່ອນຳໄປສູ່ການພັດທະນາປະເທດທາງດ້ານເສດຖະກິດ-ສັງຄົມ, ການເມືອງ ແລະ ວັດທະນະທຳ ເຊິ່ງຫຼາຍປະເທດທີ່ກຳລັງພັດທະນາໄດ້ພະຍາຍາມປັບປຸງ, ສົ່ງເສີມ, ສະໜັບສະໜູນການສຶກສາ ທັງໃນລະບົບ, ນອກລະບົບ ແລະ ດ້ວຍຕົນເອງ ເຊັ່ນສິງກະໂປ ເປັນປະເທດໜຶ່ງທີ່ມີການສຶກສານຳໜ້າໃນໂລກ, ການສຶກສາຂອງປະເທດສິງກະໂປ ສ້າງໃຫ້ນັກສຶກສາມີຈິດສຳນຶກໃນ 4 ຄຸນລັກສະນະດັ່ງນີ້:

1. ເຊື່ອໝັ້ນ ແລະ ໝັ້ນໃຈໃນຕົນເອງ, ມີຄວາມຊັດເຈນຮູ້ຖືກຮູ້ຜິດ;
2. ຮູ້ຈັກຮັບຜິດຊອບ ແລະ ຮຽນຮູ້ດ້ວຍຕົນເອງ;
3. ສາມາດເຮັດວຽກເປັນທີມງານ;
4. ມີຈິດສຳນຶກຄວາມເປັນພົນລະເມືອງສິງກະໂປສູງ.

4 ຄຸນລັກສະນະນີ້ ຈະເປັນບົດຮຽນທີ່ດີໃນການນຳມາໝູນໃຊ້ ເພື່ອເຮັດໃຫ້ການສຶກສາຂອງປະເທດເຮົາດີຂຶ້ນກວ່າເກົ່າ.



ຜ່ານມາປະເທດເຮົາ ໄດ້ມີການປະຕິຮູບການສຶກສາ 5 ຄັ້ງ; ເຖິງຢ່າງໃດກໍຕາມ, ການດຳເນີນການປະຕິຮູບດັ່ງກ່າວຍັງບໍ່ທັນປະສົບຜົນສຳເລັດເທົ່າທີ່ຄວນ ເຊິ່ງສະແດງອອກການຂາດເຂີນຄູ, ຄຸນນະພາບການສຶກສາຍັງຕ່ຳ. ມາຮອດປັດຈຸບັນນີ້ ມີຄວາມຈຳເປັນຕ້ອງປະຕິຮູບການສຶກສາຂອງສປປລາວເພື່ອໃຫ້ແທດເໝາະກັບນະໂຍບາຍ ແລະ ສະພາບເສດຖະກິດ-ສັງຄົມໃນຍຸກໃໝ່ ໃຫ້ທັນກັບຍຸກດິຈິຕອນ 4.0 ຫຼືວ່າ AI ຈຶ່ງສະເໜີວ່າຄວນປະຕິຮູບໃນ 3 ຫຼັກການທີ່ສຳ ຄັນດັ່ງນີ້:

1. ປະຕິຮູບໂຄງສ້າງ, ລະບົບການບໍລິຫານຈັດການ;
2. ປະຕິຮູບຜູ້ບໍລິຫານ ເຊັ່ນ: ຄູ-ອາຈານຕ້ອງໃຫ້ມີຄຸນນະພາບ;
3. ປະຕິຮູບຫຼັກສູດ, ວິທີການຮຽນ-ການສອນ ແລະ ການປະເມີນຜົນ.

ເຊິ່ງ 3 ຫຼັກການນີ້ ເປັນສິ່ງທີ່ສຳຄັນທີ່ຈະເຮັດໃຫ້ການສຶກສາຂອງປະເທດເຮົາມີຄວາມຈະເລີນກ້າວໜ້າຂຶ້ນຕື່ມ.

**ທ່ານ ດຣ. ສະຫຼຶມສັກ ແກ້ວຈັນທະລາ ສສຊ ປະຈຳເຂດເລືອກຕັ້ງທີ 12 ແຂວງຄຳມ່ວນ**



ໄດ້ສະເໜີໃຫ້ລັດຖະບານຮີບຮ້ອນແກ້ໄຂຄື:

1. ແກ້ໄຂບັນຫາເຄັ່ງຮ້ອນທາງດ້ານເສດຖະກິດຕ້ອງສະແດງໃຫ້ເຫັນເຖິງຄວາມເຂັ້ມງວດ ເດັດຂາດ ໂປ່ງໃສ ແລະ ເປັນມືອາຊີບ ໃນການຈັດຕັ້ງປະຕິບັດ 5 ແຜນວຽກຈຸດສຸມທີ່ໄດ້ກຳນົດໄວ້ໃນມະຕິ 03/ສພຊ ວ່າດ້ວຍການແກ້ໄຂບັນຫາເສດຖະກິດການເງິນ ເປັນຕົ້ນແມ່ນການສົ່ງເສີມການຜະລິດເພື່ອຄ້ຳປະກັນສະບຽງອາຫານ-ທົດແທນການນຳເຂົ້າ ແລະ ເປັນສິນຄ້າສົ່ງອອກເຊິ່ງນອນໃນເປົ້າໝາຍທີ 1 ຂອງແຜນພັດທະນາ, ສະເໜີໃຫ້ຈິງຈັງກັບແຜນວຽກຈຸດສຸມນີ້ ໃຫ້ເກີດເປັນຮູບປະທຳອີ່ຫຼີ; ຢາກເຮັດໃຫ້ການຜະລິດທົດແທນການນຳເຂົ້າເກີດຜົນເປັນຈິງນັ້ນ ຂ້າພະເຈົ້າສະໜັບສະໜູນຢ່າງຈິງຈັງຕໍ່ມາດຕະການດ້ານຈິດຕະສາດສັງຄົມ ເຊິ່ງກ່ອນອື່ນໝົດຕ້ອງເອົາໃຈໃສ່ເຮັດວຽກການເມືອງແນວຄິດໃຫ້ທົ່ວສັງຄົມ ເພື່ອພ້ອມກັນປັບປ່ຽນທັດສະນະຄະຕິທີ່ມັກງ່າຍ ມັກຊົມໃຊ້ແຕ່ຜະລິດຕະພັນນຳເຂົ້າ ໃຫ້ຫັນມາມັກຮັກໃນການຊົມໃຊ້ຜະລິດຕະພັນພາຍໃນ ຜະລິດຕະພັນທີ່ສ້າງຂຶ້ນຈາກສະຖາບັນຄອບຄົວທີ່ແທ້ຈິງ ແລະ ເຮັດໃຫ້ສາມາດຫັນປ່ຽນທັດສະນະຄະຕິຂອງສັງຄົມ ຈາກສັງຄົມຊົມໃຊ້ ໃຫ້ກາຍມາເປັນສັງຄົມການຜະລິດຢ່າງເປັນຮູບປະທຳ, ຖ້າເຮັດໄດ້ແນວນີ້ ພວກເຮົາກໍຈະຢູ່ລອດກັບສະພາບການຄືທຸກມື້ນີ້ໄດ້; ພ້ອມດຽວກັນນີ້ ກໍຕ້ອງຈິງຈັງໃນການຈັດຕັ້ງປະຕິບັດມາດຕະການທາງດ້ານການເງິນ ແລະ ເງິນຕາ ດ້ວຍການນຳໃຊ້ບັນດາກົນໄກແລະມາດຕະການຕ່າງໆໃຫ້ມີໝາກມີຜົນອີ່ຫຼີ ບົນພື້ນຖານການບັງ ຄັບໃຊ້ກົດໝາຍກໍຄືລະບຽບການຕ່າງໆທີ່ວາງອອກແຕ່ລະໄລຍະຢ່າງເຂັ້ມງວດ, ຫຼີກລ່ຽງ ຫຼື ປາສະຈາກຢ່າງສິ້ນເຊີງການແກ້ໄຂບັນຫາທາງດ້ານບໍລິຫານເຊັ່ນ: ພົບເຫັນມີການລະເມີດ ເຮັດບົດບັນທຶກສຶກສາອົບຮົມ ທັງໆທີ່ການລະເມີດນັ້ນໆມັນເປັນບັນຫາທາງດ້ານອາຍາ ໂດຍສະເພາະແມ່ນການລະເມີດຂອງພະນັກງານ-ລັດຖະກອນທີ່ຕິດພັນກັບ 12 ພຶດຕິກຳທີ່ເປັນການສໍ້ລາດບັງຫຼວງ.

2. ການແກ້ໄຂບັນຫາເຄັ່ງຮ້ອນທາງດ້ານວັດທະນະທຳ-ສັງຄົມ ກໍຍັງມີຫຼາຍແຜນວຽກທີ່ຍັງທ້າທາຍຕໍ່ການຈັດຕັ້ງປະຕິບັດຄາດໝາຍ ແລະ ຍັງທ້າທາຍຕໍ່ອະນາຄົດຂອງບຸກຄະລາກອນໃນປະເທດຊາດ ເຊັ່ນ:

1) ຄຸນນະພາບການຮຽນ-ການສອນ, ສະພາບການປະລະການຮຽນ ແລະ ສະພາບແວດລ້ອມເງື່ອນໄຂສິ່ງອຳນວຍຄວາມສະດວກ ສັງຄົມວ່າສາເຫດຍ້ອນຫຍັງແທ້ ເຊິ່ງເພື່ອນ ສສຊ ຫຼາຍທ່ານກໍຍົກມາວ່າເປັນຍ້ອນສະພາບຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ, ບາງພ່ອງກໍວ່າ ຍ້ອນບັນຫານະໂຍບາຍລວມທີ່ບໍ່ໄດ້ຮັບການປັບປຸງປ່ຽນແປງໄປຕາມສະພາບການຂະຫຍາຍຕົວຂອງເສດຖະກິດ-ສັງຄົມ ເປັນຕົ້ນນະໂຍບາຍຂອງການສອບເສັງເລື່ອນຊັ້ນທີ່ມີການອະນຸໂລມຄະແນນ ແລະ ອື່ນໆ ທີ່ຍັງບໍ່ສອດຄ່ອງ; ຕໍ່ບັນຫານີ້ ລັດຖະບານຕ້ອງໄດ້ຄົ້ນຄວ້າແລະກຳນົດນະໂຍບາຍໃຫ້ເໝາະສົມກວ່າເກົ່າ ຫຼື ຍົກບັນຫາການສຶກສາເປັນບັນຫາວາລະແຫ່ງຊາດຄືເພື່ອນ ສສຊ ໄດ້ຍົກຂຶ້ນ ກໍຍິ່ງເປັນການດີ ຫຼື ປະຕິບັດນະໂຍບາຍສົ່ງເສີມນັກຮຽນເກັ່ງຮອບດ້ານໄດ້ໃບປະກາດແດງ ໃຫ້ບຸລິມະສິດໂກຕາລັດຖະກອນ ໂດຍບໍ່ມີເງື່ອນໄຂ ຫຼືອື່ນໆທີ່ເຫັນວ່າເໝາະສົມກັບການດຶງດູດໃຫ້ມີການປະກອບສ່ວນພັດທະນາການສຶກສາໃຫ້ມີຄຸນນະພາບສູງຂຶ້ນ.

2) ສຳລັບຂະແໜງສາທາລະນະສຸກ ບັນຫາທີ່ເປັນສິ່ງທ້າທາຍ ແລະ ເຮັດໃຫ້ໂຮງໝໍມີການເສື່ອມຖອຍສັດທາຈາກປະຊາຊົນຜູ້ຮັບບໍລິການສາທາລະນະສຸກ ນັບມື້ນັບຫຼາຍຂຶ້ນ ສິ່ງດັ່ງກ່າວກໍແມ່ນການບໍລິການປິ່ນປົວໂດຍຜ່ານກອງທຶນປະກັນ

ອ່ານຕໍ່ໜ້າ 7

# ສະພາປະຊາຊົນແຂວງຫົວພັນ ເຄື່ອນໄຫວວຽກງານຢູ່ 3 ເມືອງ



(ສພຊ) - ຄະນະປະຈຳສະພາປະຊາຊົນແຂວງຫົວພັນ ສົມທົບກັບສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ ແລະ ພະແນກການທີ່ກ່ຽວຂ້ອງຂອງແຂວງຫົວພັນ ໄດ້ເຄື່ອນໄຫວຊຸກຍູ້, ຕິດຕາມ ກວດກາການຈັດຕັ້ງປະຕິບັດ ບັນດາໂຄງການຂຸດຄົ້ນແຮ່ທາດ ຢູ່ເມືອງຊຳເໜືອ, ເມືອງຫົວເມືອງ ແລະ ເມືອງຮ້ຽມ ໃນລະຫວ່າງ ວັນທີ 3-8 ມິຖຸນາ 2024.

ການເຄື່ອນໄຫວໃນຄັ້ງນີ້, ເປັນການລົງເກັບກຳ ແລະ ສັງລວມບັນດາຂໍ້ມູນ ເພື່ອເປັນພື້ນຖານໃຫ້ແກ່ບັນດາທ່ານສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 8 ແຂວງຫົວພັນ ໄດ້ຄົ້ນຄວ້າ, ພິຈາລະນາປະກອບຄຳຄິດຄຳເຫັນໃນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ IX ເຊິ່ງການເຄື່ອນໄຫວໃນຄັ້ງນີ້ຍັງໄດ້ຮັບຟັງການລາຍງານສະພາບລວມໂດຍຫຍໍ້ ຈາກຜູ້ຕາງໜ້າຂອງແຕ່ລະບໍລິສັດ ແລະ ອຳນາດການປົກຄອງແຕ່ລະບ້ານໃນຂອບເຂດດັ່ງກ່າວ ພ້ອມທັງຍົກໃຫ້ເຫັນຂໍ້ສະດວກ, ຂໍ້ຫຍຸ້ງຍາກ, ບົດຮຽນທີ່ຖອດຖອນໄດ້ ແລະ ຄຳສະເໜີຕ່າງໆ.

ຈາກນັ້ນ, ທັງສອງຝ່າຍໄດ້ປຶກສາຫາລືແລກປ່ຽນຄຳຄິດຄຳເຫັນເຊິ່ງກັນແລະກັນ ຢ່າງກົງໄປໄປກົງມາ ພ້ອມກັນຊອກຫາວິທີທາງແກ້ໄຂ ໃນສະເພາະໜ້າ ແລະ ຍາວນານ ໃຫ້ຮັບປະກັນແກ່ການດຳເນີນກິດຈະການໄປຢ່າງຖືກຕ້ອງ ຕາມຂັ້ນຕອນ ແລະ ລະບຽບຫຼັກການຂອງກົດໝາຍ ແລະ ຫຼີກລ່ຽງຜົນກະທົບຕໍ່ຊີວິດການເປັນຢູ່ຂອງປະຊາຊົນໃນຂອບເຂດດັ່ງກ່າວ ພ້ອມທັງເຮັດໃຫ້ຊີວິດການເປັນຢູ່ ແລະ ການພັດທະນາບ້ານ, ເມືອງ, ແຂວງກໍຄືປະເທດຂອງພວກເຮົາໃຫ້ນັບມື້ນັບພັດທະນາຍິ່ງໆຂຶ້ນ.

**(ສພຂ ຫົວພັນ)**

## ບາງຄຳເຫັນ...

(ຕໍ່ຈາກໜ້າ 6)

ສຸຂະພາບ ເຊິ່ງມະຕິກອງປະຊຸມຄັ້ງຜ່ານມາ ກໍຄືມະຕິ 97/ສພຊ ກໍໄດ້ກຳນົດຈະແຈ້ງແລ້ວແຕ່ມາຮອດປັດຈຸບັນກໍຍັງບໍ່ທັນມີຄວາມຄືບໜ້າ ແລະ ໃນບົດລາຍງານກໍບໍ່ໄດ້ກ່າວເຖິງ ເຊິ່ງເຫດຜົນທີ່ໂຮງໝໍເສື່ອມສັດທາກໍຍ້ອນວ່ານະໂຍບາຍປິ່ນປົວທີ່ໄດ້ກຳນົດໄວ້ໃນກົດໝາຍກໍຄືລະບຽບການທີ່ກ່ຽວຂ້ອງ; ສອງປີ ຜ່ານມາໂຮງໝໍຄູ່ສັນຍາຂອງກອງທຶນດັ່ງກ່າວ ບໍ່ສາມາດຈັດຕັ້ງປະຕິບັດໄດ້ ເຮັດໃຫ້ກອງທຶນບໍ່ເປັນກອງທຶນ, ປະຊາຊົນເຂົ້າຮັບບໍລິການເກືອບທຸກຢ່າງຕ້ອງເສຍເງິນ ສົມທົບກັບທັດສະນະຮັບໃຊ້ຂອງແພດໝໍຈຳນວນໜຶ່ງ ກໍບໍ່ເໝາະສົມນຳອີກ. ສະນັ້ນ, ສະເໜີໃຫ້ລັດຖະບານຮີບຮ້ອນຈັດຕັ້ງປະຕິບັດຕາມມະຕິ 118/ສພຊ ແລະ ມະຕິ 97/ສພຊ ພ້ອມທັງຊຸ້ນຂ້ຽວຈັດຕັ້ງປະຕິບັດຕາມມາດຕະການຂອງຄະນະປະຈຳສະພາແຫ່ງຊາດ ໄດ້ສະເໜີໃນມະຕິກອງປະຊຸມສະໄໝສາມັນແຕ່ລະເທື່ອ ລວມທັງເທື່ອທີ 7 ນີ້.



**ທ່ານ ກົງແກ້ວ ມີວໍລະຈັກ ສສຊ ປະຈຳເຂດເລືອກຕັ້ງທີ 13 ແຂວງສະຫວັນນະເຂດ** ໄດ້ສະເໜີລັດຖະບານເອົາໃຈໃສ່ບາງດ້ານເປັນຕົ້ນ:

1. ການຜະລິດເປັນສິນຄ້າ: ເອົາໃຈໃສ່ຜັນຂະຫຍາຍນະໂຍບາຍແຫ່ງຊາດວ່າດ້ວຍການລ້ຽງ, ການປູກ ແລະ ມາດຕະການສົ່ງເສີມການຜະລິດພາຍໃນ ກັບມາດຕະການຄວບຄຸມການນຳເຂົ້າ ໃຫ້ເປັນຮູບປະທຳລົງສູ່ທ້ອງຖິ່ນຮາກຖານໃຫ້ຫຼາຍຂຶ້ນຕື່ມ; ພ້ອມນີ້ ກໍສົ່ງເສີມການສ້າງກຸ່ມຜະລິດໃຫ້ຫຼາຍຂຶ້ນເພື່ອຊຸກຍູ້ປະຊາຊົນທຳການຜະລິດຄ້ຳປະກັນສະບຽງອາຫານທົດແທນການນຳເຂົ້າ ແລະ ເປັນສິນຄ້າເພື່ອສົ່ງເຂົ້າໂຮງງານປຸງແຕ່ງຢູ່ພາຍໃນ ຫຼືວ່າສົ່ງອອກໄປຕ່າງປະເທດ, ສະເພາະແຂວງສະຫວັນນະເຂດ ໃນໄລຍະຜ່ານມາກໍໄດ້ສົ່ງເສີມການຈັດຕັ້ງກຸ່ມການຜະລິດ ເຊິ່ງມີທັງໝົດ 856 ກຸ່ມ, ກຸ່ມປູກ 717 ກຸ່ມ ແລະ ກຸ່ມລ້ຽງ 138 ກຸ່ມ ແຕ່ຜ່ານການຕິດຕາມຊຸກຍູ້ຂອງ ສສຊ ປະຈຳເຂດເລືອກຕັ້ງທີ 13 ເຫັນວ່າບັນຫາທີ່ຈະຕ້ອງເອົາໃຈໃສ່ແກ້ໄຂຄື:

1) ການຜະລິດກະສິກຳເພື່ອທົດແທນ ແລະ ການຜະລິດສິນຄ້າສົ່ງອອກ ຍັງມີຫົວໜ່ວຍທີ່ເປັນລັກສະນະແບບຄອບຄົວກະແຈກກະຈາຍ, ການເຕົ້າໂຮມການຜະລິດເພື່ອປ້ອນຕະຫຼາດກໍຍັງບໍ່ທັນໄດ້ຫຼາຍ;

2) ການຜະລິດພືດເປັນສິນຄ້າເພື່ອສົ່ງອອກເປັນວັດຖຸດິບ ຜູ້ຜະລິດກໍຍັງຢູ່ກະແຈກກະຈາຍ, ເຮັດໃຫ້ຖືກເອົາລັດເອົາປຽບຈາກຜູ້ປະກອບການ ຫຼືວ່າພໍ່ຄ້າຄົນກາງ;

3) ແນວພັນພືດ, ແນວພັນສັດ, ຫົວອາຫານ ແລະ ປັດໄຈການຜະລິດ ສ່ວນຫຼາຍກໍຍັງນຳເຂົ້າຈາກຕ່າງປະເທດ;

4) ການສະໜອງສິນເຊື່ອດອກເບ້ຍຕ່ຳ ສຳລັບກຸ່ມ ແລະ ສະຫະກອນ ຍັງຈຳກັດບາງເງື່ອນໄຂກໍສູງ, ຄວາມສາມາດໃນການວາງແຜນການຜະລິດທຸລະກິດກໍຍັງຈຳກັດ, ການສະໜອງທຶນທີ່ຈຳເປັນໃຫ້ຜູ້ປະກອບການເພື່ອເກັບຊື້ຜົນຜະລິດຈາກປະຊາຊົນ ຍັງບໍ່ທັນກັບເວລາ.

2. ດ້ານອຸດສາຫະກຳ ແລະ ການຄ້າ: ກົນໄກການອະນຸຍາດສ້າງຕັ້ງໂຮງງານ, ການອະນຸມັດລະຫວ່າງກະຊວງກັບແຂວງ ຄວນປະສານສົມທົບກັນຕື່ມອີກ, ປະເມີນປະສິດທິພາບ ແລະ ປະສິດທິຜົນ ເຊິ່ງມີບາງໂຮງງານຢູ່ນະຄອນ ໄກສອນ ພົມວິຫານ ເຫັນວ່າພາກສ່ວນກ່ຽວຂ້ອງຍັງຖືເບົາໃນຂັ້ນຕອນການກວດກາເອກະສານບົດວິພາກການອອກໃບທະບຽນ ແລະ ທີ່ຕັ້ງກໍຍັງບໍ່ຖືກຕາມເຂດກຳນົດ ເຮັດໃຫ້ມີກິ່ນເໝັນ, ມີຜົນກະທົບ ແລະ ຜົນສະທ້ອນຕໍ່ສຸຂະພາບ ແລະ ຊີວິດການເປັນຢູ່ຂອງປະຊາຊົນ; ຜ່ານມາຍັງເຫັນວ່າກົນໄກການປະສານງານລະຫວ່າງກົມຂອງບັນດາກະຊວງກັບແຂວງ ຍັງບໍ່ທັນໂລ່ງລ່ຽນເທື່ອ.

ດ້ານການບໍລິການການນຳເຂົ້າສິນຄ້າ ເປັນຕົ້ນໝວດສະບຽງອາຫານ, ນ້ຳມັນເຊື້ອໄຟ ແລະ ອື່ນໆ ກໍຍັງກວມອັດຕາສ່ວນສູງ ລັດຖະບານຄວນຕິດຕາມກວດກາຄືນເຊັ່ນ: ໝວດສະບຽງອາຫານປະເພດໃດເຮົາຄວນສົ່ງເສີມ ແລະ ມີມາດຕະການສະກັດກັ້ນ ເພື່ອປົກປ້ອງການຜະລິດພາຍໃນໃຫ້ມີຄວາມເຂັ້ມແຂງ.

3. ດ້ານການລົງທຶນພັດທະນາພື້ນຖານໂຄງລ່າງ: ຄວນສຸມໃສ່ຕື່ມ ເປັນຕົ້ນໂຄງການບູລິມະສິດຂອງລັດຖະບານທີ່ຈັດຕັ້ງຢູ່ທ້ອງຖິ່ນ ເພື່ອສ້າງພື້ນຖານແກ່ການຜະລິດເປັນສິນຄ້າໃຫ້ຫຼາຍຂຶ້ນ.

4. ຕໍ່ກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ: ຄວນສຸມໃສ່ຖານລາຍຮັບໃໝ່ເປັນຕົ້ນແມ່ນອາ ກອນທີ່ດິນ ເຊິ່ງເປັນຖານລາຍຮັບທີ່ຍືນຍົງ, ພ້ອມກັນນີ້ກໍທົບທວນຄືນການຍົກເວັ້ນພາສີອາກອນການນຳເຂົ້າ ສານເຄມີ ແລະ ພາຫະນະທີ່ນຳເຂົ້າມາຮັບໃຊ້ໃນໂຄງການຜະລິດປຸງແຕ່ງອຸດສາຫະກຳບໍ່ແຮ່ ແລະ ອື່ນໆ.



**ທ່ານຄຳສິງ ໄຊສົມແພງ ສສຊປະຈຳເຂດເລືອກຕັ້ງທີ14 ແຂວງສາລະວັນ** ໄດ້ປະກອບຄຳເຫັນຕໍ່ການຈັດຕັ້ງປະຕິບັດບັນດາຄາດໝາຍຂອງວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ເຊິ່ງມີບາງຕອນທ່ານກ່າວວ່າປັດໄຈຕົ້ນຕໍທີ່ເປັນອຸປະສັກຕໍ່ການພັດທະນາຊົນນະບົດ ກໍຄືການແກ້ໄຂຄວາມທຸກຍາກຂອງປະຊາຊົນແມ່ນ:

1. ທີ່ດິນ: ເປັນປັດໄຈສຳຄັນ ແລະ ເຫັນວ່າມີຄວາມຫຍຸ້ງຍາກ ເຖິງແມ່ນມີການຈັດສັນ, ແບ່ງປັນໃຫ້ແຕ່ລະຄອບຄົວແລ້ວກໍຕາມ ແຕ່ຍັງບໍ່ພຽງພໍ ເພາະການພັດທະນາຊົນນະບົດແມ່ນກ່ຽວຂ້ອງກັບການຜະລິດ, ປູກຝັງ ແລະ ລ້ຽງສັດຕ່າງໆ ລ້ວນແລ້ວແຕ່ອາໄສທີ່ດິນ ຖ້າເຮົາບໍ່ມີທີ່ດິນພຽງພໍເພື່ອຕອບສະໜອງໃຫ້ປະຊາຊົນທຳມາຫາກິນ ກໍຖືວ່າມີຄວາມຫຍຸ້ງຍາກ ແລະ ບໍ່ປະສົບຜົນສຳເລັດໃນການພັດທະນາຊົນນະບົດ ກໍຄືການແກ້ໄຂຄວາມທຸກຍາກຂອງປະຊາຊົນ.

2. ພື້ນຖານໂຄງລ່າງ: ລະບົບເສັ້ນທາງ ແລະ ຊົນລະປະທານ ຫາກບໍ່ຕອບສະໜອງໄດ້ກໍພາໃຫ້ປະສົບບັນຫາ; ຜ່ານການລົງພົບປະປະຊາຊົນ ເຫັນວ່າໃນລະດູຝົນເຂົາເຈົ້າທຳການຜະລິດໄດ້ ແຕ່ການກະຈາຍຫາຕະຫຼາດບໍ່ໄດ້ ຍ້ອນບັນຫາເສັ້ນທາງ, ເວລາຝົນຕົກນ້ຳນອງບໍ່ມີຂົວຂ້າມ.

3. ບຸຄະລາກອນ ຫຼື ກຳລັງແຮງງານ: ບໍ່ວ່າແຕ່ຢູ່ຊົນນະບົດ, ຢູ່ໃນເມືອງກໍເຊັ່ນດຽວກັນ ຈະຊອກຫາໄວໜຸ່ມສີມືແຮງງານແມ່ນຍາກຫຼາຍ ກໍຄືເຮົາຮູ້ນຳກັນແລ້ວວ່າ ກຳລັງແຮງງານສ່ວນຫຼາຍເຂົາໄປອອກແຮງງານຢູ່ຕ່າງປະເທດ ເຮັດໃຫ້ພາຍໃນຂາດແຄນແຮງງານ; ແຮງງານທີ່ມີ ບາງຄັ້ງພັດກ່ຽວຂ້ອງກັບຢາເສບຕິດ ເຊິ່ງຜ່ານການລົງພົບປະຜູ້ມີສິດເລືອກຕັ້ງ ເຫັນວ່າບາງຄອບຄົວໄດ້ສະເໜີໃຫ້ຊ່ວຍແກ້ໄຂເລື່ອງຢາເສບຕິດ ເພາະຫົວໜ້າຄອບຄົວບໍ່ຄ່ອຍຢູ່ບ້ານ ສ່ວນຫຼາຍແມ່ນໜີໄປຢູ່ປ່າເພື່ອເສບຢາ, ຫົວໜ້າຄອບຄົວບໍ່ເປັນເຈົ້າການ, ບໍ່ເປັນຕົວຕັ້ງຕົວຕີນຳພາຄອບຄົວ ກໍເປັນອຸປະສັກຕໍ່ການພັດທະນາຊົນນະບົດ ກໍຄືການແກ້ໄຂຄວາມທຸກຍາກຂອງປະຊາຊົນໄດ້ຄືກັນ.

ສະນັ້ນ, ຈຶ່ງຂໍສະເໜີໃຫ້ທາງລັດຖະບານພະຍາຍາມເອົາໃຈໃສ່ຊອກວິທີແກ້ໄຂ.



**ທ່ານ ປອ. ສົມໄຊ ສີຫາຈັກ ສສຊ ປະຈຳເຂດເລືອກຕັ້ງທີ 15 ແຂວງຈຳປາສັກ** ໄດ້ປະກອບຄຳເຫັນ ເຊິ່ງມີບາງຂໍ້ສະເໜີດັ່ງນີ້:

1. ສະໜອງທຶນໃຫ້ແກ່ຫົວໜ່ວຍການຜະລິດ ໂດຍສະເພາະຫົວໜ່ວຍການຜະລິດຍ່ອຍທີ່ກະແຈກກະຈາຍ ບໍ່ທັນສາມາດເຕົ້າໂຮມເປັນກຸ່ມໄດ້ ແຕ່ມີຄວາມຈຳເປັນຕ້ອງການທຶນ, ກົງກັນຂ້າມ ຫົວໜ່ວຍການຜະລິດຈຳນວນນີ້ ຍັງບໍ່ທັນເຂົ້າເຖິງແຫຼ່ງທຶນໄດ້; ດັ່ງນັ້ນ, ຈຶ່ງຄວນສ້າງເງື່ອນໄຂໃຫ້ຫົວໜ່ວຍການຜະລິດດັ່ງກ່າວນີ້ ເຂົ້າເຖິງແຫຼ່ງທຶນ.

2. ມີນະໂຍບາຍຫຼຸດຜ່ອນການເກັບພາສີອາກອນການນຳເຂົ້າປະເພດປຸ໋ຍ, ຝຸ່ນ, ຫົວອາຫານສັດ ແລະ ອື່ນໆ ທີ່ມີຄວາມຈຳເປັນຕໍ່ການປູກການລ້ຽງ; ພ້ອມດຽວກັນນັ້ນ, ກໍຊຸກຍູ້ສົ່ງເສີມໃຫ້ພາກສ່ວນທຸລະກິດ ຜະລິດຝຸ່ນ, ຫົວອາຫານ ເພື່ອຊົມໃຊ້ພາຍໃນ, ຫຼຸດຜ່ອນການນຳເຂົ້າ.

3. ການສົ່ງເສີມຜະລິດສິນຄ້າເພື່ອສົ່ງອອກ ຕ້ອງນຳໃຊ້ເຕັກນິກວິຊາການ, ເຮົາຜະລິດໄດ້ ແຕ່ຍັງບໍ່ສາມາດຮັບປະກັນທາງດ້ານຄຸນນະພາບ; ດັ່ງນັ້ນ, ສິນຄ້າທີ່ພວກເຮົາສົ່ງອອກຈຶ່ງບໍ່ສາມາດແຂ່ງຂັນກັບຕະຫຼາດຕ່າງປະເທດໄດ້.




# ນົກອີອ້ຽງກິນໝາກໂພໄຮ ແຊວໆ ສຽງບໍ່ມີໂຕຮ້ອງ ແຊວໆ ຮ້ອງໂຕດຽວໝົດໝູ່

# ດົ້ນກົບເມກ

ການຫຼຽວໜ້າ-ຫຼຽວຫຼັງ ທົບທວນເຖິງພູມປັນຍາຂອງບັນພະບຸລຸດ ແລະ ວິໄຈວິຈານໃຫ້ຮູ້ແຈ້ງ ນຳມາປະຍຸກໃຊ້ໃນປັດຈຸບັນໄດ້ນັ້ນ ເຂົາເອີ້ນວ່າຄົນບໍ່ລືມອະດີດ, ບໍ່ຫຼົງປັດຈຸບັນ ແລະ ມຸ່ງໄປສູ່ອະນາຄົດຢ່າງດຽວ ແຕ່ສະຫຼາດນຳເອົາຍອດປັນຍາບັນພະຊົນຂອງຕົນມາປະຍຸກໃຊ້ ຖືວ່າເປັນລູກຫຼານຜູ້ສະຫຼາດ ຮູ້ສືບຕໍ່ຍອດປັນຍາ ໃຫ້ຈະເລີນຕໍ່ເນື່ອງ ເຊິ່ງຖ້າວ່າເຮົາຫຼົງໄຫຼໃນປັດຈຸບັນ ແຕ່ບໍ່ເຄີຍສຶກສາຮູ້ເຫັນຍອດປັນຍາຈາກອະດີດແລ້ວ ເຮົາຈະເອີ້ນຕົນເອງວ່າເປັນຜູ້ກະຕັນຍູໄດ້ແນວໃດ?

ຂ້າພະເຈົ້າຢາກເອົາປັນຍາສຽວສະຫວາດຫົວຂໍ້ຂ້າງເທິງມາອະທິບາຍຂະຫຍາຍຄວາມເລົ່າສູ່ກັນຟັງ ກໍເພື່ອແລກປ່ຽນກັນບໍ່ໃຫ້ຫຼົງລືມອະດີດ-ຫຼົງໄຫຼປັດຈຸບັນ ຈົນບໍ່ສາມາດກຳນົດທິດທາງກ້າວເດີນໄປອະນາຄົດ ຢ່າງຖືກຕ້ອງ ຫຼື ກ້າວໄປຂ້າງໜ້າຢ່າງຜິດໆ ຖືກໆ ຈົນຂາດເອກະລັກຕົວຕົນ ຫຼື ຂາດເອກະລັກຊາດທາງປັນຍາ; ນົກອີອ້ຽງກິນໝາກໂພໄຮແຊວໆສຽງບໍ່ມີໂຕຮ້ອງແຊວໆຮ້ອງໂຕດຽວໝົດໝູ່ໝາຍຄວາມວ່າ ການສ້າງສາພັດທະນາຊາດ-ສັງຄົມຍ່ອມມີທາງສຽງດີ-ບໍ່ດີ; ວິພາກວິຈານເປັນຂອງທຳມະດາ, ແຕ່ຂໍໃຫ້ສະຫຼາດຮູ້ຈັກສັງລວມເອົາຄວາມເຫັນແຕກຕ່າງນັ້ນ ທີ່ເປັນປະໂຫຍດມານຳໃຊ້ເຊິ່ງບາງເທື່ອກໍອາດມີທາງສຽງຈາກຜູ້ມີປັນຍາຖືກຕ້ອງກໍມີ ດັ່ງນັ້ນ, ສຽງວິພາກ, ວິຈານ ຖືເປັນທຳມະດາ, ເຮົາຕ້ອງຮູ້ຈັກຮັບຟັງຄຳເຫັນແຕກຕ່າງ. ແຊວໆສຽງບໍ່ມີໂຕຮ້ອງໝາຍວ່າ: ຜູ້ທີ່ຈະເຮັດແທ້ທຳຈິງເປັນຕົບບີນັ້ນບໍ່ມີ ຂ້ອນຂ້າງຫາຍາກ; ແຊວໆຮ້ອງໂຕດຽວໝົດໝູ່ ໝາຍວ່າ: ເຖິງຈະມີຫຼາຍທາງສຽງຕ່າງກັນ ແຕ່ກໍມີເປົ້າໝາຍເພື່ອຢາກໃຫ້ຊາດ-ສັງຄົມ ພັດທະນາໄປສູ່ຄວາມຈະເລີນ ພຽງແຕ່ວິທີຄິດເຫັນຕ່າງກັນ ເຊິ່ງມີເຫດຜົນໜ້າຮັບຟັງຄິດພິຈາລະນານຳເອົາມາປັບປຸງ-ນຳໃຊ້ ໃຫ້ເກີດດອກອອກຜົນ.

**ສັງລວມໄດ້ວ່າ:** ການມີຄຳເຫັນ, ທາງສຽງຕ່າງກັນແຕ່ຈຸດໝາຍເພື່ອແນໃສ່ເປົ້າໝາຍດຽວກັນ ຄືໃຫ້ຊາດບ້ານເມືອງຈະເລີນກ້າວໜ້າ, ການເປີດໃຈກວ້າງຮັບຟັງສຽງຄິດເຫັນຕ່າງກັນ ກໍເປັນວິທີການບໍລິຫານສະຫຼາດ ເພື່ອກ້າວໄປສູ່ຄວາມຈະເລີນກ້າວໜ້າ.



# ຂຽນຄຳລາວໃຫ້ຖືກ

# ຄູແສງ

| ຖືກ | ຜິດ |
|---|---|
| ຫ້ອງໂຂ່ງ | ຫ້ອງໂຄ່ງ |
| ເສື້ອໂຄ່ງ | ເສື້ອໂຂ່ງ |
| ສັບສົ່ນ | ສັບຊົ່ນ |
| ຊໍ່ດອກໄມ້ | ສໍ່ດອກໄມ້ |
| ນອນເສື່ອ | ນອນເຊື່ອ |
| ເຊື່ອໃຈ | ເສື່ອໃຈ |
| ສ່ຽວສະຫາຍ | ຊ່ຽວສະຫາຍ |
| ຊ່ຽວຊານ | ສ່ຽວຊານ |
| ໜ້າຖັ່ງດັ່ງຄົນ | ໜ້າທັ່ງດັ່ງຄົນ |
| ໄມ້ທັ່ງ | ໄມ້ຖັ່ງ |




# ຂົບ – ກັດ – ສວາບ – ງັບ – ຕອດ – ຈິກ – ສົບ

ຄຳສັບທັງ 7 ນີ້ ມີຄວາມໝາຍອ່າວໃກ້ຄຽງກັນ ຊຶ່ງລ້ວນແຕ່ເປັນຄຳກິລິຍາທີ່ມີຄວາມໝາຍຄືແລະຕ່າງກັນດັ່ງນີ້:

'ຂົບ' ໝາຍເຖິງ "ກັດ" ເຊັ່ນ ໝາຂົບ, ງູຂົບ, ຍຸງຂົບ ເປັນຕົ້ນ.
'ຂົບ' ຍັງມັກໃຊ້ຊ້ອນກັບຄຳວ່າ 'ຄິດ' ເປັນ 'ຂົບຄິດ' ເຊັ່ນ
- ສອງຄົນນີ້ຂົບຄິດບັນຫານີ້ບໍ່ຕົກແຕກ.
'ກັດ' ໝາຍເຖິງ "ຂົບ", ໃຊ້ແຂ້ວໜີບໃຫ້ຂາດ" ເຊັ່ນ
- ໝູກັດຖົງເຂົ້າເປັນຮູ.
- ລາວຖືກໝາກັດແຄ່ງຈົນເຂົ້າຮອດກະດູກ.
'ກັດ' ຍັງມີຄວາມໝາຍອ້ອມ "ເຮັດໃຫ້ເປື່ອຍເປັນບາດ" ເຊັ່ນ
- ລາວເຮັດວຽກຕີນແຊ່ນ້ຳຕະຫຼອດ ເຮັດໃຫ້ນ້ຳກັດຕີນ.
- ແມ່ຕູ້ຄ້ຽວໝາກ ໃສ່ປູນຫຼາຍໂພດ ປູນເລີຍກັດປາກ.
'ກັດ' ຍັງໝາຍເຖິງ "ຜິດຖຽງກັນ" ເຊັ່ນ
- ສອງຄົນນີ້ມັກກັດກັນຢູ່ຕະຫຼອດ.
'ສວາບ' ເວລາເວົ້າມັກອອກສຽງເປັນ 'ສອບ' ໝາຍເຖິງ "ອາການກິນຟ້າວໆຂອງໝູ, ໝາ ຫຼືປາ" ເຊັ່ນ
- ພໍແຕ່ເອົາຮຳລົງຮາງ ໝູກໍສວາບເອົາໆ.
- ຫຼັງຈາກຖິ້ມປ່ຽງເຂົ້າຈີ່ລົງນ້ຳ ປາໃນໂຕສ່ຳຂາກໍສວາບເອົາຢ່າງໄວວາ.
'ສວາບ' ຍັງສາມາດໃຊ້ແທນໃຫ້ 'ຂົບ' ຫຼື 'ກັດ' ໄດ້ ເຊັ່ນ
- ຂ້ອຍຖືກໝາສວາບຂາ ຈົນຕ້ອງໄດ້ສັກຢາກັນວໍ້.
ບາງເທື່ອກໍນຳມາໃຊ້ກັບຄົນທີ່ກິນເຂົ້າປານໝູ ເຊັ່ນ
- ຢ່າສວາບໄວຫຼາຍ ໃຫ້ໝູ່ໄດ້ກິນນຳແດ່ !"
'ງັບ' ໝາຍເຖິງ "ອັດເຂົ້າ, ພັບເຂົ້າ, ປິດ" ເຊັ່ນ
- ງັບປະຕູໄວ້ແດ່ ຈັກໜ້ອຍມີຄົນມາຈອບເບິ່ງ.
- ຄອມໃຊ້ແລ້ວ ງັບໄວ້ແດ່ເດີ !
- ຢ່າຊເວົ້າຫຼາຍ, ງັບປາກໄວ້ແດ່ !
'ງັບ' ຍັງໃຊ້ໃນຄວາມໝາຍ "ກິນ" ເຊັ່ນ
- ງັບຊ້າໆແດ່, ອາຫານຍັງຫຼາຍຢູ່.
'ງັບ' ຍັງໃຊ້ໃນຄວາມໝາຍ "ກິນເງິນກິນຄຳ" ເຊັ່ນ
- ເງິນໂຄງການຖືກໜໍນີ້ງັບໝົດແລ້ວ.
ນອກນັ້ນ ຄົນບາງກຸ່ມຍັງນຳມາໃຊ້ເປັນສັບສະແລງ ໝາຍເຖິງ "ຈັດການ" ເຊັ່ນ
- ສາວນັ້ນຖືກເຖົ້າແກ່ງັບພໍແຮງແລ້ວ !
'ຕອດ' ໝາຍເຖິງ "ໃຊ້ສົບແຂງຫຼືແຫຼມສັບລົງ" ເຊັ່ນ
- ໄກ່ຕອດອື່ງ.
- ນົກຕອດກິນບົ້ງ.
- ລາວຖືກເຜິ້ງຕອດ.
- ໜໍນັ້ນຖືກຕໍ່ຕອດຈົນໜ້າບວມ.
'ຈິກ' ໝາຍເຖິງ "ຕອດ" ເຊັ່ນ
- ໄກ່ຜູ້ຈິກຫົວໄກ່ແມ່.
- ນົກກະທາໃນຄອກຫຼາຍໂຕຈິກຫົວກັນ.
'ຈິກ' ຍັງໝາຍເຖິງ "ບີບ", ຫຍິກໃຫ້ແຕກຕາຍ" ເຊັ່ນ
- ເອົານິ້ວມືຈິກຫົວເຮືອດ.
'ຈິກ' ຍັງໝາຍເຖິງ "ເຮັດໃຫ້ແຈບດີ" ເຊັ່ນ
- ເວລານອນຕ້ອງຈິກມຸ້ງໃຫ້ດີ ບໍ່ຊັ້ນຍຸງຊິເຂົ້າມາຂົບ.
'ຈິກ' ຍັງໝາຍເຖິງ "ໃຊ້ນິ້ວມືກໍ່ເຂົ້າແລ້ວສັບລົງ" ເຊັ່ນ
- ຢ່າຊຈິກໝາກກອກໃສ່ຫົວນ້ອງແມ້ !
'ສົບ' ໝາຍເຖິງ "ເອົາສົບປັກລົງ" ເຊັ່ນ
- ສັບພີ ແມ່ນ ໄກ່ສັບອື່ງ (ໄກ່ຕອດອື່ງ), ສັບພັງ ແມ່ນ ໄກ່ສັບຂີ້ (ໄກ່ຕອດຂີ້).
'ສົບ' ຍັງໝາຍເຖິງ "ເອົາປາຍຄົມຂອງພ້າຟັນລົງໃສ່" ເຊັ່ນ
- ເອົາມີດອີໂຕ້ສັບລົງກະດູກຂາໂຄ່ຍງົວ.




# ວິທີເຮັດວຽກ

## ພາກທີ 6 ວິທີນຳ

ວິທີນຳແມ່ນເຮັດແນວໃດ?

ບໍ່ວ່າວຽກການອັນໃດກໍຕ້ອງໃຊ້ວິທີນຳສອງຢ່າງລຸ່ມນີ້ຄື: ວິທີທີ່ໜຶ່ງ, ແມ່ນປະສານແຜນການລວມກັບການນຳພາສະເພາະແຕ່ລະແຫ່ງ. ວິທີທີ່ສອງ, ແມ່ນປະສານຜູ້ນຳກັບປະຊາຊົນ. ປະສານແຜນການລວມ ກັບການນຳພາສະເພາະ ແຕ່ລະແຫ່ງແມ່ນເຮັດແນວໃດ? ບໍ່ວ່າວຽກການອັນໃດ, ຖ້າມີນະໂຍບາຍລວມ ແລະ ຄຳຮຽກຮ້ອງລວມ ກໍບໍ່ສາມາດຂົນຂວາຍປະຊາຊົນທັງມວນໄດ້. ແຕ່ວ່າຖ້າຜູ້ນຳຫາກເຮັດແຕ່ວຽກລວມ ເຮັດໝົດທຸກອັນພ້ອມກັນບາດດຽວ ແນໃສ່ເຮັດສະເພາະບ່ອນໃດບ່ອນໜຶ່ງ ທົດລອງເຮັດຈົນໄດ້ຜົນ ບໍ່ແນໃຫ້ແລ້ວຖອດຖອນບົດຮຽນຈາກບ່ອນນັ້ນ ໄປນຳພາບ່ອນອື່ນ ເຮັດນຳກັນນັ້ນ, ກໍບໍ່ສາມາດຮູ້ໄດ້ວ່ານະໂຍບາຍຂອງຕົນຖືກ ຫຼື ຜິດ ແລະ ກໍບໍ່ສາມາດເຮັດໃຫ້ເນື້ອໃນຂອງນະໂຍບາຍຂອງຕົນຄົບຖ້ວນ ແລະ ຖືກກັບຄວາມຈິງໄດ້.ຍົກຕົວຢ່າງກໍຄື: ການປັບປຸງພັກ. ນອກຈາກ ແຜນການລວມຂອງວຽກອັນນີ້ແລ້ວ, ແຕ່ລະສຳນັກງານ ຫຼື ແຕ່ລະກອງທະຫານ ຕ້ອງເລືອກພາກສ່ວນໃດພາກສ່ວນໜຶ່ງຂອງສຳນັກງານ ຫຼື ກອງທະຫານຂອງຕົນ, ຄົ້ນຄວ້າ ແລະ ກວດເບິ່ງຄັກແນ່ ວ່າວຽກການປັບປຸງພັກຢູ່ໃນພາກສ່ວນນັ້ນເປັນແນວໃດແທ້ ພ້ອມກັນນັ້ນ ຜູ້ນຳຕ້ອງເລືອກເອົາພະນັກງານ 3 ຫຼື 4 ຄົນຢູ່ໃນພາກ ສ່ວນນັ້ນເປັນພະນັກງານແບບຢ່າງ, ຄົ້ນຄວ້າຊີວະປະຫວັດຂອງເຂົາເຈົ້າ, ບົດຮຽນໃນດ້ານຄວາມນຶກຄິດຂອງເຂົາເຈົ້າ, ນິດໄສໃຈຄໍຂອງເຂົາເຈົ້າ, ການຮ່ຳຮຽນ ແລະ ການເຮັດວຽກຂອງເຂົາເຈົ້າ ໃຫ້ຄັກແນ່.

ອ່ານຕໍ່ສະບັບໜ້າ...



ສຸກສະບາຍທາຍໂລດ

# ອາຫານຂອງແຕ່ລະກຸ່ມເລືອດທີ່ຄວນກິນ ແລະ ຄວນຫຼີກລ່ຽງ

ໂດຍ: ທິວາກະທິ




**ກຸ່ມເລືອດ AB:** ຄວນກິນອາຫານປະເພດ ອາຫານທະເລ, ເນີຍ, ນົມ, ຜະລິດຕະພັນຈາກຖົ່ວເຫຼືອງ, ຜັກ ແລະ ໄຂ່. ແຕ່ຄວນຫຼີກລ່ຽງປາຊີ້ນຂາວ, ຊີ້ນສັດໃຫຍ່, ໝາກສີດາ, ສາລີ, ໝາກມ່ວງ, ຖົ່ວແດງ ເພາະພູມຄຸ້ມກັນບໍ່ແຂງແຮງ ກົດໃນກະເພາະນ້ອຍຍ່ອຍອາຫານປະເພດຊີ້ນສັດໄດ້ຍາກ.

**ກຸ່ມເລືອດ A:** ຄວນກິນປະເພດຜັກ, ປາ, ນົມຖົ່ວເຫຼືອງ.ແຕ່ຄວນຫຼີກລ່ຽງໄຂ່, ນົມງົວ, ແປ້ງ, ຊີ້ນສັດ ເພາະລະບົບຍ່ອຍອາຫານ, ລະບົບພູມຄຸ້ມກັນບໍ່ດີ, ສ່ຽງເປັນພະຍາດຫົວໃຈ ແລະ ມະເຮັງ.

**ກຸ່ມເລືອດ B:** ຄວນເລືອກກິນເຂົ້າກ້ອງ, ເຂົ້າໂອດ, ຂີງ, ຊາຂຽວ, ໂສມ ສ່ວນອາຫານທີ່ຄວນຫຼີກລ່ຽງແມ່ນ ປູ, ກຸ້ງ, ຫອຍແຄງ, ຊີ້ນໄກ່ ແລະ ແປ້ງ ເພາະກົດໃນກະເພາະອາຫານຫຼາຍ, ລະບົບເຜົາຜານບໍ່ດີແລະເລືອດແຂງໂຕຊ້າ.

**ກຸ່ມເລືອດ O:** ຄວນເລືອກກິນອາຫານປະເພດຊີ້ນສັດ, ອາຫານທະເລ, ຜັກຫົມ ແຕ່ຄວນຫຼີກລ່ຽງໝາກໄມ້ທີ່ມີລົດສົ້ມ, ຊາ, ກາເຟ, ເບຍ ເພາະກົດໃນກະເພາະຫຼາຍ ລະບົບເຜົາກໍບໍ່ດີປານໃດ ເລືອດກໍແຂງຕົວຊ້າຕື່ມອີກ.

ແນວໃດກໍຕາມອາຫານທີ່ເວົ້າມານັ້ນ ກໍບໍ່ໄດ້ໝາຍຄວາມວ່າສິ່ງທີ່ຄວນຫຼີກລ່ຽງກຸ່ມເລືອດນັ້ນຈະກິນບໍ່ໄດ້ ແຕ່ວ່າຖ້າຫຼີກລ່ຽງໄດແມ່ນຈະດີຕໍ່ສຸຂະພາບ ແຕ່ຖ້າຫຼີກລ່ຽງບໍ່ໄດ້ກໍຄວນກິນເລັກໜ້ອຍເທົ່ານັ້ນ ເພື່ອໃຫ້ຮ່າງກາຍຂອງເຮົາມີສຸຂະພາບທີ່ດີ.

**ຂໍ້ມູນຈາກ: www.laopost.com**

ອາດ ກະວີລາວ

## ຢູ່ໃຫ້ເພິ່ນສັນເສີນ ໜີໃຫ້ຄົນຄຶດຮອດ

\# ລູກທາດສາມປາງ

✻ ສ້າງຜົນງານເດັ່ນໄວ້
ຮັກຮໍ່ຊົມສັນເສີນ
ຄວາມດີຄຸມຄອງຄຸ້ມ
ຜົນງານຫຼາຍສະຫງ່າດ້ວຍ

ຍາມຢູ່ຄົນຍໍ
ຍົກແຍງນິຍົມຍ້ອງ
ນໍາເຮົາອູ້ມຊ່ວຍ
ດີລ້ວນຊູ່ອັນ

✻ ຄັນວ່າເຮົາບໍ່ເຕື້ອງ
ງານບໍ່ຂຶນຂວາຍເຮັດ
ຖອຍຫຼັງນອນເນົາຄ້ານ
ປຽບຫອຍເດີນເຄື່ອນຊ້າ

ຕາຕໍ່ທໍາການ
ມິດເມີນມາຍມ້ອຍ
ໂຍຍຍານລ້າລ່ອຍ
ຂາກ້າວອ່ອນແອ...ບໍ່ດີແລ້ວ !

✻ ແຕ່ວ່າຍາມທ່ຽວຫຼິ້ນ
ຕາຮຸ່ງໄສມືນຫາ
ຍາມຄໍ່າຄືນເດີກຂ້ອນ
ຍາມເວັນນອນເມື່ອຍງ້ວງ

ຫັນແອ່ນໄວວາ
ຕື່ນມາພະລັນຈ້ອນ
ທະຍານຈອນໄປປ່ວງ
ຂວາງຂ້າງເສື່ອໝອນ

✻ ອ່ອນເພຍຍາມຮຸ່ງເຊົ້າ
ປຽບດັ່ງຄານມາສວາຍ
ຫຼີງວຽກໂຊເຊກ້າວ
ເໜືອນຄົນໂຊມປ່ວງບ້າ

ສະເໜີເຕົ່າທໍາງານ
ໄຕ່ບືນປານບົ້ງ
ເມົາຍາເຫຼືອງຫຼ່າ
ຫັນໜ້າອວ່າຍຫຼັງ

✻ ຍາມເຮົາຍັງຮ່ວມບ້ານ
ບາກບັ່ນທໍາຄວາມດີ
ຜົນງານແຖມເປັນເສົາຄໍ້າ
ຄົນໃຜຄືດັ່ງເວົ້າ

ດອມເພິ່ນຄວນຂະຫຍັນ
ໃສ່ຕີນຕາມແຕ້ມ
ຄຸນນະທໍາສັດຊື່
ເມືອໜ້າຍ່ອມຈະເລີນ

✻ ຍາມຢູ່...ໃຫ້ເພິ່ນຊົມຊື່ນຍ້ອງ
ເອົາຜົນງານປະດັບສີ
ຍາມຫ່າງຄົນຄະນຶງໜ້າ
ຄວາມດີ...ມັນບໍ່ພັງເປື່ອຍລົ້ມ

ຍໍຍື່ນແຍງເຮົາ
ສ່ວນດີຕີນສ້າງ
ຖາມຫາຈາຈົ່ມ
ສູນຖິ້ມເສື່ອມຫາຍ...ດອກນາ!






ໝົດສາຍ ລະບາຍ

(ເລື່ອງເບົາໆ ເວົ້າແບບກັນເອງ ບໍ່ເຄັ່ງພິທີການ)

\# ສຽມຫ້ຽນ

✻ **ກອງ**ປະຊຸມ**ສະໄໝສາມັນເທື່ອທີ 7** ຂອງສະພາແຫ່ງຊາດ ຊຸດທີ IX ຫຍັບເຂົ້າໃກ້**ອາລະສຸດທ້າຍ** ແລະ ຈະໄດ້ປິດລົງໃນອັນທີ **2 ກໍລະກົດນີ້** ຊຸດທີ່ຊົມຊື່ນຍໍຍົກຍ້ອງ ບັນດາທ່ານ **ສສຊ** ຍໍຍົກບາຄໍາສະເໜີ ຍື່ນຕໍ່ກອງປະຊຸມເວົ້າ ນໍາເອົາທິດທາງແກ້ ກຽມໄປເຜີຍແຜ່ ໃຫ້ພໍ່ແມ່ພີ່ນ້ອງ ລາວຮູ້ທົ່ວເຖິງກັນ **ຊອບແລ້ວ !**

✻ **ສະ**ບາຍດີຝ່າຍເບື້ອງ **18 ເຂດ ສພຂ** ເປັນແນວໃດເດບໍ່? ຊື່ນສຸກສະບາຍບໍ່ ສ່ວນວ່າ **ສສຊ** ເບື້ອງ ກອງປະຊຸມພົດສະນີ່ນ ເປັນຂະບວນຄຶກຄື້ນ ຄໍາເຫັນເຈົ້າຜ່ານໄມ ທາງບັ້ນອົດໃຈກຽມຕໍ່ຕັ້ງ ຟັງຜ່ານອອນລາຍ **ເອົາເນີ !** ປະຕິບັດວຽກງານທີ່ເພີ່ນວາງຊີ້ນໍາໄວ້ ຫຼັງກັບໄປກຽມພ້ອມ ກອງປະຊຸມກະກຽມເປີດ **ເທື່ອທີ 7** ເຂດເລືອກຕັ້ງ ໃຜຊີເລີ້ມກ່ອນກັນ **ເດບໍ່ !**

ຊອບຍິ້ມ

\# ແອ່ນຕຸ້ງ

## ເລື່ອງ: ເຈົ້າບໍ່ຮູ້ຈັກ

ບ່າວຊຽງ-ສາວຄຸ ກໍາລັງໄປທ່ຽວດ້ວຍລົດໄຟ ສາວຄຸເລີຍເອົ້າຂຶ້ນວ່າ:

**ສາວຄຸ:** ເມື່ອໃດຂ້ອຍເຫັນເຈົ້າຍິ້ມ ແລະ ເວົ້າ ຂ້ອຍຢາກເຊີນເຈົ້າໄປເຮືອນຂ້ອຍເດ!!!!

**ບ່າວຊຽງ:** ອຸຍ....! ເຈົ້າຢູ່ຄົບດຽວທາວ

**ສາວຄຸ:** ບໍ່ ຂ້ອຍເປັນໝໍແຂ້ວ

**ບ່າວຊຽງ:** ?????



ຄະຕິເຕືອນໃຈ

\# ດອກຫຍ້າ

ເພາະສະແຫວງຫາ ບໍ່ແມ່ນເພາະລໍຄອຍບານ
ເພາະຊ່ຽວຊານ ບໍ່ແມ່ນເພາະໂອກາດ
ເພາະຄວາມສາມາດ ບໍ່ແມ່ນເພາະໂຊກຊ່ວຍ
ລິຂິດຟ້າຫຼືຊິສູ້ມານະຕົນ




## ປະທານາທິບໍດີຣະວັນດາ ຍຸບສະພາ, ຈະເລືອກຕັ້ງໃນເດືອນກໍລະກົດນີ້



ວັນສຸກທີ 14 ມິຖຸນາ ຜ່ານມາ, ທ່ານ ພອນ ຄາກາເມ (Paul Kagame) ປະທານາທິບໍດີ ແຫ່ງສາທາລະນະລັດຣະວັນດາ ໄດ້ປະກາດຍຸບສະພາຜູ້ແທນປະຊາຊົນ ຫຼື ສະພາຕ່ຳ ກ່ອນການເລືອກຕັ້ງປະທານາທິບໍດີ ແລະ ສະມາຊິກສະພາໃນເດືອນກໍລະກົດນີ້.

ພາຍໃຕ້ລັດຖະທຳມະນູນຂອງຣະວັນດາ, ປະທານາທິບໍດີຈະຍຸບສະພາຢ່າງໜ້ອຍ 30 ວັນ ແລະ ບໍ່ເກີນ 60 ວັນ ກ່ອນໝົດອາຍຸການຂອງສະພາ.

ສະພາຜູ້ແທນປະຊາຊົນຊຸດນີ້ ໄດ້ຮັບການສ້າງຕັ້ງຂຶ້ນໃນປີ 2018 ມີອາຍຸການ 5 ປີ; ຄາດວ່າຈະສິ້ນສຸດໃນປີ 2023, ແຕ່ວາລະດັ່ງກ່າວ ໄດ້ຖືກຕໍ່ອາຍຸອອກໄປພາຍຫຼັງການປັບປຸງລັດຖະທຳມະນູນ. ຍ້ອນເຫດນັ້ນ, ການເລືອກຕັ້ງປະທານາທິບໍດີ ແລະ ສະມາຊິກສະພາ ຈະຈັດຂຶ້ນໃນວັນດຽວກັນ.

ປະຊາຊົນຣະວັນດາ ຈະໄປປ່ອນບັດໃນວັນທີ 15 ກໍລະກົດນີ້ ເພື່ອເລືອກຕັ້ງສະມາຊິກສະພານິຕິບັນຍັດແລະປະທານາທິບໍດີຜູ້ໃໝ່.

**ແຫຼ່ງຂ່າວ: ຊິນຮວາ**

## GERB-UDF ຊະນະການເລືອກຕັ້ງ ສະພາແຫ່ງຊາດກ່ອນກຳນົດຂອງບຸນກາລີ



ທະຫານກອງກຽດຕິຍົດຢືນຢູ່ຕໍ່ໜ້າອາຄານສະພາແຫ່ງຊາດ ໃນນະຄອນຫຼວງໂຊເຟຍ

ຕາມຜົນທີ່ປະກາດໂດຍຄະນະກຳມະການການເລືອກຕັ້ງສູນກາງ (Central Election Commission - CEC) ຂອງປະເທດບຸນກາລີ ໃນຕອນແລງວັນພະຫັດທີ 13 ມິຖຸນາ 2024 ພາຍຫຼັງການເລືອກຕັ້ງທີ່ຈັດຂຶ້ນເມື່ອວັນອາທິດທີ 9 ມິຖຸນາຜ່ານມາ, ແນວຮ່ວມຂອງພັກ GERB ແລະ ສະຫະພາບພະລັງປະຊາທິປະໄຕ (Union of Democratic Forces) ຫຼື GERB-UDF ໄດ້ຮັບໄຊຊະນະໃນການເລືອກຕັ້ງສະພາແຫ່ງຊາດກ່ອນກຳນົດ; ຕາມຜົນດັ່ງກ່າວ GERB-UDF ໄດ້ 68 ທີ່ນັ່ງ ໃນສະພາແຫ່ງຊາດທີ່ມີສະມາຊິກ 240 ທ່ານ, ອັນດັບທີ 2 ແມ່ນຂະບວນການເພື່ອສິດທິ ແລະ ເສລີພາບ (Movement for Rights and Freedoms) ໄດ້ 47 ທີ່ນັ່ງ.

ມີອີກ 5 ກຸ່ມການເມືອງທີ່ສາມາດເຂົ້າສູ່ສະພານິຕິບັນຍັດ ຄື: ແນວຮ່ວມປະຊາທິປະໄຕບຸນກາລີ 39 ທີ່ນັ່ງ, ພັກຟື້ນຟູ 38 ທີ່ນັ່ງ, ແນວຮ່ວມເພື່ອບຸນກາລີ 19 ທີ່ນັ່ງ, ພັກປະຊາຊົນ 16 ທີ່ນັ່ງແລະພັກຄວາມຍິ່ງໃຫຍ່ 13 ທີ່ນັ່ງ.

ພາຍໃຕ້ລັດຖະທຳມະນູນຂອງບຸນກາລີ, ປະທານາທິບໍດີຈະແຕ່ງຕັ້ງນາຍົກລັດຖະມົນຕີທີ່ໄດ້ຮັບການສະເໜີຊື່ໂດຍກຸ່ມສະມາຊິກສະພາແຫ່ງຊາດ (ສສຊ) ທີ່ໃຫຍ່ທີ່ສຸດ ເພື່ອສ້າງຕັ້ງລັດຖະບານໃໝ່, ລັດຖະບານໄດ້ຮັບເລືອກໂດຍສຽງສ່ວນຫຼາຍຫຼາຍກວ່າເຄິ່ງໜຶ່ງຂອງ ສສຊ ໃນປັດຈຸບັນ; ຖ້າການເຈລະຈາລົ້ມເຫຼວ, ລັດຖະທຳມະນູນອະນຸຍາດໃຫ້ມີຄວາມພະຍາຍາມຕື່ມອີກ 2 ຄັ້ງ ເພື່ອສ້າງຕັ້ງລັດຖະບານໂດຍກຸ່ມໃຫຍ່ອັນດັບສອງແລະໂດຍກຸ່ມໃດກຸ່ມໜຶ່ງ.

**ແຫຼ່ງຂ່າວ: ຊິນຮວາ**

## ລັດຖະບານປະສົມຂອງເຄັນຢາ ປັບປຸງຮ່າງກົດໝາຍການເງິນ ທ່າມກາງແຮງກົດດັນຈາກປະຊາຊົນ




ເຄັນຢາ ກວານຊາ (Kenya Kwanza) ແນວຮ່ວມລັດຖະບານຂອງສາທາລະນະລັດເຄັນຢາ ໄດ້ສ້າງຄວາມປ່ຽນແປງຢ່າງໃຫຍ່ຫຼວງຕໍ່ຮ່າງກົດໝາຍການເງິນປີ 2024 ທີ່ສະເໜີເມື່ອວັນອັງຄານທີ 18 ມິຖຸນາຜ່ານມາ, ຫຼັງຈາກທີ່ສາທາລະນະຊົນໄດ້ສົ່ງສຽງຄັດຄ້ານກ່ຽວກັບແຜນການຂຶ້ນພາສີສຳລັບສິນຄ້າທີ່ຈຳເປັນ, ທີ່ພັກອາໄສ, ພາຫະນະ ແລະ ການບໍລິການດ້ານການເງິນ.

ກ່າວຄຳເຫັນທີ່ກອງປະຊຸມລັດຖະສະພາຢູ່ນະຄອນຫຼວງໄນໂຣບີ, ທ່ານປະທານາທິບໍດີ ວິນລຽມ ຣູໂຕ (William Ruto) ໄດ້ປະກາດວ່າ: ການປັບປຸງຮ່າງກົດໝາຍວ່າດ້ວຍການເງິນປີ 2024 ແມ່ນມີຂຶ້ນພາຍຫຼັງໄດ້ພິຈາລະນາຄຳຄິດເຫັນຈາກປະຊາຊົນ ແລະ ບັນດາພາກສ່ວນກ່ຽວຂ້ອງ ໃນລະຫວ່າງກອງປະຊຸມການມີສ່ວນຮ່ວມຂອງປະຊາຊົນ.

ການປະທ້ວງຕໍ່ຕ້ານຮ່າງກົດໝາຍສະບັບນີ້ ໄດ້ເກີດຂຶ້ນໃນນະຄອນຫຼວງໄນໂຣບີ ເຊິ່ງຕ້ອງປະເຊີນກັບສຽງວິພາກວິຈານຈາກຊາວເຄັນຢາຈຳນວນຫຼາຍທີ່ຕ້ອງຕໍ່ສູ້ກັບຄ່າຄອງຊີບທີ່ສູງຢູ່ແລ້ວ. ຕຳຫຼວດຕ້ານການຈະລາຈົນ ໄດ້ໃຊ້ແກັສນ້ຳຕາເພື່ອຂັບໄລ່ຜູ້ປະທ້ວງທີ່ຮຽກຮ້ອງໃຫ້ບັນດາສະມາຊິກສະພາປະຕິເສດຮ່າງກົດໝາຍດັ່ງກ່າວ.

ໃນລະຫວ່າງກອງປະຊຸມທີ່ເປັນປະທານໂດຍທ່ານ ຣູໂຕ, ບັນດາສະມາຊິກສະພາແຫ່ງຊາດ ແລະສະມາຊິກສະພາສູງ ໄດ້ທົບທວນຄືນການປ່ຽນແປງຮ່າງກົດໝາຍການເງິນປີ 2024 ທີ່ສະເໜີໂດຍທ່ານ ຄິມານີ ຄູເຣຍ (Kimani Kuria) ປະທານກຳມາທິການການເງິນ ແລະ ແຜນການແຫ່ງຊາດ, ສະພາແຫ່ງຊາດ ເຊິ່ງໄດ້ກ່າວວ່າ: ຮ່າງກົດໝາຍດັ່ງກ່າວ ມີຈຸດປະສົງຈະສ້າງລາຍຮັບເພີ່ມຕື່ມ 2.35 ຕື້ໂດລາສະຫະລັດ ເຮັດໃຫ້ຍອດລາຍຮັບທັງໝົດທີ່ຄາດຄະເນໄວ້ໃນປີນີ້ ເພີ່ມຂຶ້ນເປັນ 25.7 ຕື້ໂດລາສະຫະລັດ.

ຄະນະລັດຖະມົນຕີທີ່ພວມດຳລົງຕຳແໜ່ງເຊິ່ງຈັດຕັ້ງຂຶ້ນພາຍຫຼັງການເລືອກຕັ້ງທົ່ວໄປໃນປີ 2022 ໄດ້ປະເຊີນໜ້າກັບແຮງກົດດັນທີ່ຈະເພີ່ມລາຍຮັບຕື່ມອີກ ທ່າມກາງການຊຳລະໜີ້ສິນຂອງລັດຖະບານທີ່ເພີ່ມຂຶ້ນ.

ການປັບປຸງທີ່ສຳຄັນໃນຮ່າງກົດໝາຍສະບັບນີ້ ລວມມີການຍົກເລີກພາສີມູນຄ່າເພີ່ມ (VAT) 16 ເປີເຊັນ ສຳລັບເຂົ້າຈີ່, ການຂົນສົ່ງນ້ຳຕານ, ການບໍລິການດ້ານການເງິນ, ທຸລະກຳແລກປ່ຽນເງິນຕາຕ່າງປະເທດ ແລະ ພາສີພາຫະນະ 2.5 ເປີເຊັນ; ນອກຈາກນັ້ນ, ຈະບໍ່ເພີ່ມຄ່າທຳນຽມການໂອນເງິນຜ່ານມືຖື ແລະຍົກເລີກພາສີອາກອນສຳລັບນ້ຳມັນພືດ. ການເກັບພາສີຈາກກອງທຶນທີ່ຢູ່ອາໄສ ແລະ ປະກັນສັງຄົມ ຈະບໍ່ດຶງດູດພາສີລາຍໄດ້.

ຂໍ້ສະເໜີການເກັບພາສີທາງນິເວດ (Eco Levy) ຈະນຳໃຊ້ກັບຜະລິດຕະພັນສຳເລັດຮູບນຳເຂົ້າທີ່ກໍ່ໃຫ້ເກີດຂີ້ເຫຍື້ອເອເລັກໂຕຣນິກເທົ່ານັ້ນ ຍົກເວັ້ນຜະລິດຕະພັນທີ່ຜະລິດພາຍໃນທ້ອງຖິ່ນເຊັ່ນ: ຜ້າອະນາໄມ, ຜ້າອ້ອມ, ໂທລະສັບ, ຄອມພິວເຕີ, ຢາງລົດ ແລະ ລົດຈັກ.

ທ່ານ ຣູໂຕ ເນັ້ນໜັກເຖິງຄວາມພະຍາຍາມຂອງລັດຖະບານເພື່ອຫຼຸດການນຳເຂົ້າບັນດາຜະລິດຕະພັນທີ່ສາມາດຜະລິດໄດ້ ແນໃສ່ປົກປ້ອງການຜະລິດພາຍໃນປະເທດແລະຮັບປະກັນສ້າງວຽກເຮັດງານທຳທີ່ໝັ້ນຄົງ. “ສະຖຽນລະພາບທີ່ທ່ານເຫັນໃນລະບົບການແລກປ່ຽນເງິນຕາຕ່າງປະເທດ ແມ່ນຜົນມາຈາກນະໂຍບາຍໂດຍເຈດຕະນາຂອງພວກເຮົາເພື່ອຫຼຸດຜ່ອນການນຳເຂົ້າສິ່ງທີ່ຜະລິດຢູ່ທ້ອງຖິ່ນ”. ທ່ານຕັ້ງຂໍ້ສັງເກດວ່າ ລະບົບໃບແຈ້ງໜີ້ເອເລັກໂຕຣນິກ (e-TIMS) ທີ່ເປີດຕົວເມື່ອບໍ່ດົນມານີ້ ໂດຍອີງການລາຍຮັບເຄັນຢາ ຈະຖືກຍົກເລີກສຳລັບຊາວກະສິກອນ ແລະ ທຸລະກິດຂະໜາດນ້ອຍທີ່ມີລາຍຮັບຕ່ຳກວ່າ 1 ລ້ານຊິນລິງ (shillings) ຫຼື ປະມານ 7,800 ໂດລາສະຫະລັດ.

ຮ່າງກົດໝາຍວ່າດ້ວຍການເງິນ ຍັງໄດ້ກຳນົດພາສີອາກອນສຳລັບການນຳເຂົ້າໄຂ່, ຫົວຜັກບົ່ວ ແລະ ມັນຝຣັ່ງ ເພື່ອປົກປ້ອງຊາວກະສິກອນທ້ອງຖິ່ນ; ນອກຈາກນັ້ນ, ພາສີອາກອນສຳລັບເຄື່ອງດື່ມທີ່ມີທາດເຫຼົ້າຈະອີງໃສ່ລະດັບປະລິມານເຫຼົ້າທີ່ບັນຈຸ.

**ແຫຼ່ງຂ່າວ: ຊິນຮວາ**

## ອິນເດຍ ໃຊ້ກົດໝາຍໃໝ່ເພື່ອກວດກາການທຸດຈະລິດໃນການສອບເສັງ



ໃນຕອນເດິກຂອງຄືນວັນສຸກທີ 21 ມິຖຸນາຜ່ານມາ, ລັດຖະບານອິນເດຍ ໄດ້ບັງຄັບໃຊ້ກົດໝາຍສະບັບໃໝ່ເພື່ອກວດກາການທຸດຈະລິດໃນການດຳເນີນການສອບເສັງ; ກົດໝາຍສະບັບໃໝ່ນີ້ ໄດ້ກຳນົດບົດລົງໂທດທາງອາຍາເຊັ່ນ ຈຳຄຸກ 10 ປີ ແລະ ປັບໃໝເງິນ 10 ລ້ານຣູປີອິນເດຍ (ປະມານ 119,674 ໂດລາສະຫະລັດ) ສຳລັບຜູ້ທີ່ພົບເຫັນວ່າມີສ່ວນກ່ຽວຂ້ອງກັບຄວາມຜິດປົກກະຕິ ຫຼື ການທຸດຈະລິດໃນຂະນະທີ່ດຳເນີນການສອບເສັງເຂົ້າມະຫາວິທະຍາໄລ ຫຼື ວຽກງານຂອງລັດຖະບານ.

ກົດໝາຍສະບັບໃໝ່ທີ່ຜ່ານລັດຖະສະພາອິນເດຍໃນເດືອນກຸມພາປີນີ້ ມີຊື່ວ່າ ກົດໝາຍວ່າດ້ວຍການສອບເສັງສາທາລະນະ (ການປ້ອງກັນວິທີການທີ່ບໍ່ຍຸຕິທຳ) ປີ 2024 [Public Examinations (Prevention of Unfair Means) Act 2024].

ການເຄື່ອນໄຫວດັ່ງກ່າວຖືວ່າມີຄວາມໝາຍສຳຄັນ ທ່າມກາງການປະທ້ວງຢ່າງກວ້າງຂວາງຂອງພວກນັກສຶກສາ ແລະ ກຸ່ມພາກປະຊາສັງຄົມໃນທົ່ວປະເທດຕໍ່ອີງການສອບເສັງແຫ່ງຊາດຂອງລັດຖະບານກາງ ກ່ຽວກັບເຫດການຮົ່ວໄຫຼຂອງບົດສອບເສັງລະດັບຊາດທີ່ເກີດຂຶ້ນຊ້ຳແລ້ວຊ້ຳອີກ.

**ແຫຼ່ງຂ່າວ: ຊິນຮວາ**

# ການພັດທະນາເສດຖະກິດລະດີ ດ້ານແມ່ຍິງມີສິດເຕັມສ່ວນ

ວິເສດ ສະແຫວງສຶກສາ

ເມື່ອປະມານ 8-9 ປີຜ່ານມາ, ຂ່າວໃຫຍ່ດັງໄກມາຈາກປະເທດ ອາຣັບບີ ຊາອູດິດ (ຫຼື ຊາອຸດິ ອາຣາເບຍ) ນັ້ນກໍຄືທາງການຂອງປະເທດນີ້ ໄດ້ລຶບລ້າງຫຼາຍຂໍ້ຈຳກັດທີ່ກົດໜ່ວງຖ່ວງດຶງແມ່ຍິງບໍ່ໃຫ້ມີສິດເຕັມສ່ວນໃນການພັດທະນາເສດຖະກິດ-ສັງຄົມ. ສິດໃໝ່ອ່ຽມທີ່ແມ່ຍິງຂອງປະເທດນີ້ບໍ່ເຄີຍໄດ້ຊົມໃຊ້ມາກ່ອນນັ້ນລວມມີ: ສິດໃນການຂັບລົດ ເຊິ່ງໃນເມື່ອກ່ອນນັ້ນ ຍິງຄົນໃດຂືນໄປຂັບລົດແມ່ນຕ້ອງຖືກລົງໂທດ. ນອກນັ້ນ, ກໍຍັງມີສິດເຂົ້າຊົມຮູບເງົາ-ລະຄອນ, ຄອນເສີດ, ສິດເຂົ້າຮັບໃຊ້ໃນກອງທັບ, ສິດຂອງຄູເພດຍິງໃນການສິດສອນໃນຫ້ອງຮຽນນັກຮຽນເພດຊາຍ. ການເປີດກວ້າງສິດສຳລັບແມ່ຍິງໃນຂົງເຂດທີ່ກ່າວມາຂ້າງເທິງນັ້ນ ໄດ້ນຳໄປສູ່ການຂະຫຍາຍຕົວດ້ານເສດຖະກິດໃນຂະແໜງການກ່ຽວຂ້ອງ ຄືເຮັດໃຫ້ຂະແໜງການຮູບເງົາ-ລະຄອນແລະສະຖານທີ່ບັນເທີງເຕີບໂຕ, ມີຜູ້ໃຊ້ບໍລິການຫຼາຍຂຶ້ນ ແທນທີ່ຈະມີແຕ່ເພດຊາຍຄືເມື່ອກ່ອນ, ທຸລະກິດໃນຂະແໜງກິລາຂະຫຍາຍຕົວແບບບໍ່ເຄີຍມີມາກ່ອນ ຍ້ອນມີຜູ້ເຂົ້າຊົມເປັນແມ່ຍິງ. ສຳລັບຂະແໜງບັນເທີງ ແມ່ຍິງບໍ່ພຽງແຕ່ເປັນຄົນໃຊ້ບໍລິການແຕ່ຍັງເປັນຜູ້ປະກອບການ, ເປັນເຈົ້າຂອງໂຮງລະຄອນ, ໂຮງຮູບເງົາ, ຈັດລາຍການຄອນເສີດ. ສ່ວນໄປແຮງແຊງໜ້າແຖວກວ່າໝູ່ນັ້ນ ກໍຄືຂະແໜງຂົນສົ່ງເຊັ່ນ: ການບໍລິການຂາຍລົດ, ແປງລົດ, ເຊົ່າລົດ ແລະ ອື່ນໆ ຂ່າວບອກວ່າທຸລະກິດຕະຫຼາດລົດນັ້ນ ພຸ່ງໂຕຂຶ້ນສູງໄປຄຽງຄູ່ກັບທຸລະກິດສອນ ແລະ ຮຽນຂັບລົດ. ເລື່ອງມີຢູ່ວ່າພຽງອາທິດດຽວພາຍຫຼັງໄດ້ມີການຍົກເລີກຫ້າມແມ່ຍິງຂັບລົດເທົ່ານັ້ນ, ມະຫາວິທະຍາໄລ ປຣິນເຊສ ນູຣາ (Princess Noora) ເຊິ່ງເປັນມະຫາວິທະຍາໄລສະເພາະນັກສຶກສາຍິງ ກໍໄດ້ປະກາດສ້າງຕັ້ງຄະນະວິຊາຂັບລົດຂຶ້ນທັນທີ ເພື່ອໃຫ້ນັກສຶກສາຍິງທີ່ສົນໃຈເລືອກຮຽນວິຊານີ້. ມະຫາວິທະຍາໄລແຫ່ງນີ້ມີນັກສຶກສາຍິງທັງໝົດກວ່າ 60,000 ຄົນ (ນັບທັງຢູ່ສູນກາງ ແລະ ສາຂາໃນທົ່ວປະເທດ).

ເປັນອັນວ່ານັກສຶກສາຍິງທັງໝົດສາມາດເຂົ້າຮຽນວິຊາຂັບລົດຖ້າຕ້ອງການ. ວິຊາຂັບລົດຂອງມະຫາວິທະຍາໄລ ມີລັກສະນະຄົບວົງຈອນເພື່ອໃຫ້ໂຊເຟີມີອາຊີບປີ່ນອ້ອມ ເຊັ່ນ: ວິຊາສ້ອມແປງລົດ ແລະ ຄວາມຮູ້ກ່ຽວກັບການຕະຫຼາດລົດ. ສິດຂອງແມ່ຍິງໃນການຂັບລົດຍັງໄດ້ສ້າງວຽກເຮັດງານທຳໃຫ້ແມ່ຍິງຂອງປະເທດນີ້ໄດ້ຢ່າງຫຼວງຫຼາຍ ເພາະວ່າບໍລິສັດຜະລິດ-ຈຳໜ່າຍລົດເຊັ່ນ: ນິດສັນ (ຍີ່ປຸ່ນ), ຟອດ-ເຊັບໂຣເລັດ (ສະຫະລັດອາເມຣິກາ) ແລະ ອື່ນໆ ໄດ້ໂດດເຂົ້າໄປຊິງຕະຫຼາດກັນເພື່ອຍາດສ່ວນແບ່ງລູກຄ້າເພດຍິງໃນປະເທດນີ້. ເປັນອັນວ່າການໃຫ້ສິດເພດຍິງນັ້ນມີຜົນດີ ບໍ່ພຽງແຕ່ທາງດ້ານສິດປະຊາທິປະໄຕ ແລະ ຄວາມສະເໝີພາບເທົ່ານັ້ນ ແຕ່ຍັງລາມໄປສູ່ຜົນດີທາງດ້ານເສດຖະກິດອີກດ້ວຍ. ໃນປັດຈຸບັນ, ທາງການຂອງປະເທດຊາອຸດິ ອາຣາເບຍ ຫຼຸດຜ່ອນການອາໄສໄພເພິ່ງແຕ່ຊັບພະຍາກອນທຳມະຊາດ (ນ້ຳມັນ) ເພື່ອເປັນແມ່ແຮງໃນການພັດທະນາເສດຖະກິດ ແລ້ວຫັນໄປສູ່ການລົງທຶນໂດຍເນັ້ນການພັດທະນາຊັບພະຍາກອນມະນຸດພາຍໃນປະເທດເປັນຕົ້ນຕໍ. ສິ່ງເສີມໃຫ້ແມ່ຍິງສາມາດກ້າວຂຶ້ນມາຢືນຢູ່ແຖວດຽວກັນກັບຜູ້ຊາຍໃນການພັດທະນາເສດຖະກິດ-ສັງຄົມຂອງປະເທດ.

TE SOLE


## ແຈ້ງການ

ໃນໄລຍະດຳເນີນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດຊຸດທີ IX, ຄະນະເລຂາທິການສະພາແຫ່ງຊາດ ໄດ້ຈັດຕັ້ງໜ່ວຍຮັບຄຳສະເໜີຂອງປະຊາຊົນຜ່ານໂທລະສັບສາຍດ່ວນ ເພື່ອຮັບເອົາຄຳຄິດຄຳເຫັນ ແລະ ຄຳສະເໜີໂດຍກົງຈາກປະຊາຊົນ ທີ່ຈະສົ່ງໄປຍັງກອງປະຊຸມ, ເຊິ່ງສາມາດສົ່ງໄດ້ຕາມວິທີລຸ່ມນີ້:

- ສາຍດ່ວນ: 156 (ໃນໂມງລັດຖະການ)
- ອີເມວ: nalao.156@gmail.com
- App: Laona





## ການຕະຫຼາດ

*# ບ່າວກະບື*

ນັກການຕະຫຼາດຈຳໜ່າຍເກີບສອງຄົນ ຖືກສົ່ງໄປອາຟຣິກາ ເພື່ອເຈາະຕະຫຼາດໃໝ່ຢູ່ທີ່ນັ້ນ. ຫຼັງຈາກເດີນທາງໄປຮອດສາມວັນ, ຕົວແທນການຕະຫຼາດທ່ານໜຶ່ງໂທຄືນເມືອຫ້ອງການ ໂດຍບອກວ່າ "ຂ້າພະເຈົ້າຈະກັບຄືນປະເທດໃນຖ້ຽວບິນໜ້າໂລດ. ຢູ່ທີ່ນັ້ນທຸກຄົນຍ່າງຕີນເປົ່າ ດັ່ງນັ້ນຈະບໍ່ມີຜູ້ຊື້ເກີບໃສ່ດອກ".

ສ່ວນຕົວແທນການຕະຫຼາດອີກທ່ານໜຶ່ງ ສົ່ງອີແມວກັບຄືນໄປໂຮງງານໂດຍບອກວ່າ: 'ໂອກາດສຳລັບຕະຫຼາດເກີບນັ້ນ ກວ້າງໄກທີ່ສຸດ, ເພາະທຸກຄົນຢູ່ທີ່ນັ້ນຍັງບໍ່ທັນມີເກີບໃສ່ເທື່ອ".

## Marketing

*# BAOKBU*

Two shoe salespeople were sent to Africa to open up new markets. Three days after arriving, one salesperson called the office and said, "I'm returning on the next flight. Can't sell shoes here. Eberybody goes barefoot" At the same time the other salesperson sent an email to the factory, telling " The prospects are unlimited. Nobody wears shoes here!"



## ປະເມີນ...

(ຕໍ່ຈາກໜ້າ 1)

ເກົ່າ ແລະ ອົງການຈັດຕັ້ງມະຫາຊົນ ເຂົ້າຮ່ວມຫຼາຍກວ່າ 150 ທ່ານ.

ທ່ານ ປອ. ໄຊສົມພອນ ພົມວິຫານ ໄດ້ກ່າວວ່າ: ຈຸດປະສົງຂອງກອງປະຊຸມຄັ້ງນີ້ ແມ່ນແນໃສ່ສະຫຼຸບຕີລາຄາການຈັດຕັ້ງປະຕິບັດລັດຖະທຳມະນູນໃນໄລຍະເກືອບ 10 ປີທີ່ຜ່ານມາ ໃຫ້ເຫັນໄດ້ຂໍ້ສະດວກ, ຂໍ້ຫຍຸ້ງຍາກ, ຜົນສຳເລັດ, ບັນຫາຄົງຄ້າງ ພ້ອມທັງສາເຫດ, ບົດບັນຍັດທີ່ສອດຄ່ອງຫຼືບໍ່ສອດຄ່ອງ, ບົດຮຽນ ແລະ ບັນຫາຕັ້ງຂຶ້ນເພື່ອເປັນຂໍ້ມູນໃຫ້ແກ່ການຄົ້ນຄວ້າ, ປັບປຸງເນື້ອໃນຂອງລັດຖະທຳມະນູນ ສະບັບປີ 2015 ໃຫ້ຖືກຕ້ອງ, ຄົບຖ້ວນ, ສອດຄ່ອງ, ຮັດກຸມ ແລະ ສາມາດປະຕິບັດໄດ້; ພ້ອມກັນນີ້, ເພື່ອຖອດຖອນບົດຮຽນໃຫ້ແກ່ການຈັດຕັ້ງປະຕິບັດການປະເມີນຢູ່ໃນຈຸດຕ່າງໆ ທັງອ້ອມຂ້າງສູນກາງແລະທ້ອງຖິ່ນ ໃຫ້ໄດ້ຮັບຜົນດີ.

ໃນກອງປະຊຸມ, ຜູ້ເຂົ້າຮ່ວມໄດ້ຮັບຟັງການສະເໜີບົດສະຫຼຸບຕີລາຄາການຈັດຕັ້ງປະຕິບັດລັດຖະທຳມະນູນສະບັບປີ 2015 ແລະ ການປະກອບຄຳເຫັນຂອງບັນດາທ່ານຈາກຫ້ອງວ່າການສູນກາງພັກ, ຄະນະໂຄສະນາອົບຮົມສູນກາງພັກ, ຄະນະຈັດຕັ້ງສູນກາງພັກ, ຄະນະກວດກາສູນກາງພັກ, ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ, ສະຖາບັນວິທະຍາສາດເສດຖະກິດ ແລະ ສັງຄົມແຫ່ງຊາດ, ຄະນະພົວພັນຕ່າງປະເທດສູນກາງພັກ, ອົງການແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ສະຫະພັນກຳມະບານລາວ, ສະຫະພັນແມ່ຍິງລາວ ແລະ ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ລວມທັງຂໍ້ສະເໜີຕໍ່ກັບການປັບປຸງເນື້ອໃນຂອງລັດຖະທຳມະນູນ.

**(ນາງ ອາລິນ ສຸພົມມະປະກິດ)**

ທະນາຄານພັດທະນາລາວ
LDB Bank

# ປະມວນພາບບັນຍາກາດກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດຊຸດທີ IX































**ຜູ້ຊີ້ນໍາ**

ທ່ານ ສິງຄໍາ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**

ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ຄໍາຫວັນ ດາລາວົງ

**ຄະນະບັນນາທິການ**

ທ່ານ ປອ. ພິດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ

**ກອງບັນນາທິການ**

ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ປາກາລັກ ພົມມີໄຊ

**ອອກແບບ - ຈັດໜ້າ**

ທ່ານ ນາງ ກຸກກິກ ບຸດດາໄຊ